ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

ກະຊວງສຶກສາທິການ ແລະ ກິລາ.

ພະແນກສຶກສາທິການ ແລະ ກິລາ

ແຂວງຊຽງຂວາງ.

# ຫຼັກສູດທ້ອງຖິ່ນ

## ເລື່ອງ: ຄວາມຮູ້ ແລະຄວາມສຳຄັນ ຂອງຊີວະນາໆພັນ.

### ສຳລັບຊັ້ນປະຖົມສຶກສາ ປີທີ 4-5.





ຈັດທຳໂດຍ: ຄະນະຮັບຜິດຊອບການສ້າງຫຼັກສູດທ້ອງຖິ່ນ ພະແນກສຶກສາທິການ ແລະກິລາແຂວງຊຽງຂວາງ.

ສະໜັບສະໜູນໂດຍ: ໂຄງການພັດທະນາລະບົບການຜະລິດແບບນິເວດ ກະສິກຳຢູ່ເຂດພູດອຍພາກເໜືອຂອງ ສ.ປ.ປລາວ (TABI )

ສົກຮຽນ 2013 – 2014.

# ຄຳນຳ.

ຫຼັກສູດເປັນບ່ອນອີງໃຫ້ແກ່ຄູ ແລະ ຜູ້ບໍລິຫານການສຶກສາຂັ້ນຕ່າງໆເພື່ອຕິດຕາມການຮຽນ - ການສອນແຕ່ລະວິຊາຂອງແຕ່ລະຂັ້ນຢ່າງຖືກຕ້ອງ.

ຫຼັກສູດທ້ອງຖິ່ນສະບັບນີ້ໄດ້ຖືກສ້າງຂື້ນໂດຍການຮ່ວມມືຈາກຫຼາຍພາກສ່ວນເຊັ່ນ: ພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງພູກູດ, ຄູສອນ ແລະ ຊຸມຊົນຢູ່ໃນກຸ່ມບ້ານເປົ້າໝາຍຂອງເມືອງພູກູດ, ໂດຍໄດ້ຮັບການສະໜັບສະໜູນຈາກໂຄງການພັດທະນາລະບົບການຜະລິດແບບນິເວດກະສິກຳ ຢູ່ເຂດພູດອຍພາກເໜືອຂອງ ສ.ປ.ປ ລາວ ( TABI ).

ຫຼັກສູດທ້ອງຖິ່ນເຫຼັ້ມນີ້ສ້າງຂື້ນເພື່ອຈັດການຮຽນຮູ້ປະສົມປະສານກັບຫຼັກສູດສ່ວນກາງໃນວິຊາ: ໂລກອ້ອມຕົວເຮົາ, ພາສາລາວ, ວິຊາເຕັກໂນ ແລະ ວິຊາສິລະປະກຳເຫຼົ່ານີ້ເປັນຕົ້ນ. ທັງໝົດນີ້ກໍ່ຢູ່ໃນກອບຈຳນວນຊົ່ວໂມງຮຽນທີ່ກະຊວງສຶກສາທິການ ແລະ ກິລາວາງອອກ, ທັງນີ້ກໍ່ເພື່ອເຮັດໃຫ້ເນື້ອໃນການຮຽນ - ການສອນມີຄວາມສອດຄ່ອງ ແລະ ຕອບສະໜອງຕາມຄວາມຕ້ອງການຂອງທ້ອງຖິ່ນ.

ຫຼັກສູດທ້ອງຖິ່ນເຫຼັ້ມນີ້ມີເນື້ອໃນສະເພາະເຈາະຈົງໃສ່ຄວາມຮູ້ກ່ຽວກັບຊີວະນາໆພັນ ແລະ ຄວາມສຳຄັນຂອງມັນ, ພ້ອມກັນນັ້ນກໍ່ຍັງໄດ້ນຳໃຊ້ຄວາມຮູ້ພູມປັນຍາທ້ອງຖິ່ນ, ໂດຍສະເພາະແມ່ນກິດຈະກຳເຝິກທັກສະເພື່ອການຮຽນຮູ້ກ່ຽວກັບການສືບສານມູນເຊື້ອວັດທະນະທຳ, ຮີດຄອງປະເພນີອັນດີງາມຂອງທ້ອງຖິ່ນ, ການຮັກສາສິ່ງແວດລ້ອມ ແລະ ການທຳມາຫາກິນແບບດັ້ງເດີມ. ທັງນີ້ກໍ່ເພື່ອເປັນການປູກຈິດສຳນຶກໃຫ້ແກ່ເດັກນັກຮຽນໃຫ້ຮູ້ຮັກຊີວະນາໆພັນທີ່ມີຢູ່ໃນທ້ອງຖິ່ນຂອງຕົນ.

ປື້ມຫຼັກສູດທ້ອງຖິ່ນສະບັບນີ້ຍັງຄົງບໍ່ປັດສະຈາກໄດ້ຂໍ້ຂາດຕົກບົກຜ່ອງ ແລະກໍ່ອາດບໍ່ທັນຄົບຖ້ວນເທື່ອ. ສະນັ້ນຈື່ງຂໍຄວາມຮ່ວມມືຈາກທ່ານຜູ້ຊົມໃຊ້ທຸກພາກສ່ວນຈົ່ງປະກອບຄຳຄິດຄຳເຫັນ ເພື່ອຈະໄດ້ນຳໄປຄົ້ນຄວ້າແກ້ໄຂໃຫ້ມັນດີຂື້ນ.

**ຄະນະຮັບຜິດຊອບ.**

# ສາລະບານ.


ບົດນຳ ........................................................................ ໜ້າ 3

ສາລະບານ ................................................... ໜ້າ 4

**ຫຼັກສູດການຮຽນຮູ້ສຳລັບຫ້ອງ ປ4** ........................ ໜ້າ 6

ບົດທີ 1: ຄວາມຮູ້ກ່ຽວກັບຊີວະນາໆພັນ ກະສິກຳ............... ໜ້າ 7

ບົດທີ 2: ຊີວະນາໆພັນໃນທ້ອງຖິ່ນ................................ ໜ້າ 10

ບົດທີ 3: ຖິ່ນຢູ່ອາໄສຂອງຊີວະນາໆພັນ......................... ໜ້າ 13

ບົດທີ 4: ເຝິກປະຕິບັດ: ລົງສຳຫຼວດຊີວະນາໆພັນ............. ໜ້າ 15

ບົດທີ 5: ການລອດເຫຼືອຂອງຊີວະນາໆພັນ...................... ໜ້າ 17

ບົດທີ 6: ລະດູການອາຫານທ້ອງຖິ່ນ............................. ໜ້າ 19

ບົດທີ 7: ເຝິກປະຕິບັດ: ການລົງສຳຫຼວດຊີວະນາໆພັນ...... ໜ້າ 21

ບົດທີ 8: ການແຜ່ພັນຂອງພືດ ແລະ ສັດ........................ ໜ້າ 23

ບົດທີ 9: ເຝິກປະຕິບັດ: ການລົງສຳຫຼວດຊີວະນາໆພັນ......... ໜ້າ 24

ບົດທີ 10: ການທຳລາຍຊີວະນາໆພັນ............................... ໜ້າ 26

ບົດທີ 11: ຫາກິນຊ່ວຍພໍ່ແມ່......................................... ໜ້າ 28

ບົດທີ 12: ອາຫານສົ່ງເສີມສຸຂະພາບ............................... ໜ້າ 30

ບົດທີ 13: ຄວາມສຸກບ້ານເຮົາ........................................ ໜ້າ 32

ບົດທີ 14: ລະບຽບກົດໝາຍທ້ອງຖິ່ນ................................ ໜ້າ 34

ບົດທີ 15: ທວນຄືນຄວາມຮູ້ກ່ຽວກັບຊີວະນາໆພັນ............... ໜ້າ 36

**ຫຼັກສູດການຮຽນຮູ້ສຳລັບຫ້ອງ ປ5** ...................... ໜ້າ 38

ບົດທີ 1: ປັດໃຈສຳຄັນຂອງການມີຊີວິດ ...................... ໜ້າ 39

ບົດທີ 2: ຄວາມຍືນຍາວຂອງຊີວິດ ........................... ໜ້າ 41

ບົດທີ 3: ການນຳໃຊ້ຊີວະນາໆພັນ ............................ ໜ້າ 43

ບົດທີ 4: ເຝິກປະຕິບັດການລົງສຳຫຼວດຊີວະນາໆພັນ ........ ໜ້າ 45

ບົດທີ 5: ຕົ້ນໄມ້ເປັນຢາ ....................................... ໜ້າ 47

ບົດທີ 6: ເຝິກປະຕິບັດການນຳໃຊ້ຕົ້ນໄມ້ເປັນຢາ ............. ໜ້າ 49

ບົດທີ 7: ສິນຄ້າຊີວະນາໆພັນ ................................. ໜ້າ 51

ບົດທີ 8: ເຄື່ອງປະດັບມີຄ່າ .................................. ໜ້າ 53

ບົດທີ 9: ເຝິກປະຕິບັດຫັດຖະກຳພື້ນບ້ານ ................... ໜ້າ 55

ບົດທີ 10: ການອະນຸລັກຊີວະນາໆພັນ ......................... ໜ້າ 58

ບົດທີ 11: ອາຫານຕາມລະດູການ .............................. ໜ້າ 60

ບົດທີ 12: ການທຳລາຍຊີວະນາໆພັນ .......................... ໜ້າ 63

ບົດທີ 13: ສຸກໃຈໃນບ້ານເກີດ ................................. ໜ້າ 65

ບົດທີ 14: ເຝິກປະຕິບັດການຂະຫຍາຍແນວພັນໝາກໄມ້ ..... ໜ້າ 67

ບົດທີ 15: ບົດທວນຄືນ ......................................... ໜ້າ 69

+ ຄຳຂອບໃຈ.................................................. ໜ້າ 71

+ ຄະນະຮັບຜິດຊອບການສ້າງຫຼັກສູດ.................. ໜ້າ 71.

ກະຊວງສຶກສາທິການ ແລະ ກິລາ

ພະແນກສຶກສາທິການ ແລະ ກິລາ

ແຂວງຊຽງຂວາງ.

# ຫຼັກສູດທ້ອງຖິ່ນ

# ເລື່ອງ:

## ຄວາມຮູ້ກ່ຽວກັບຊີວະນາໆພັນ ແລະ ຖິ່ນຢູ່ອາໄສຂອງມັນ.

ສໍາລັບຊັ້ນປະຖົມປີທີ 4.





# ບົດທີ 1.

# ຄວາມຮູ້ກ່ຽວກັບຊີວະນາໆພັນ ກະສິກຳ

## 1: ຄວາມໝາຍຂອງຊີວະນາໆພັນ ກະສິກຳ.

- ຊີວະ ໝາຍເຖິງສິ່ງທີ່ມີຊີວິດ.
- ນາໆພັນ ໝາຍເຖິງຄວາມຫຼາກຫຼາຍຂອງແນວພັນ.
- ກະສິກຳ ໝາຍເຖິງຜົນຜະລິດຈາກການປູກຝັງລ້ຽງສັດ.

ຊີວະນາໆພັນກະສິກຳທຳມະຊາດໝາຍເຖິງ ຄວາມຫຼາກຫຼາຍຂອງສິ່ງທີ່ຊີວິດທີ່ເກີດຂື້ນຕາມທຳມະຊາດ, ຊຶ່ງໃນນັ້ນກໍ່ລວມມີທັງພືດ ແລະ ສັດທີ່ອາໄສຢູ່ຕາມພື້ນທີ່ຕ່າງໆເຊັ່ນ: ຕາມຫ້ອງທົ່ງນາ, ຕາມແມ່ນ້ຳລຳເຊ, ຕາມພູຜາປ່າດົງ ແລະ ບ່ອນອື່ນໆ.

### ❖ ຊີວະນາໆພັນແບ່ງອອກເປັນ 2 ປະເພດຄື:

ປະເພດສັດ ແລະ ປະເພດພືດ.



1: ສັດລວມມີ 3 ປະເພດຄື: ປະເພດສັດບົກ, ສັດນ້ຳ ແລະ ສັດເຄິ່ງນ້ຳເຄິ່ງບົກ.

ກ. ປະເພດສັດບົກມີຫຼາຍຊະນິດເຊັ່ນວ່າ: ນົກ, ໝູ, ບີ້ງ, ບ່າງ, ກະຮອກ, ກະເລັນ ເຈຍ, ຈອນຟອນ, ແລນ, ກະທ້າງ, ຕັກແຕນ ແລະ ອື່ນໆ.

ຂ. ປະເພດສັດນ້ຳລວມມີ: ປາ, ກຸ້ງ, ຫອຍ, ໜ້ຽວ, ແມງດາ, ອ່ຽນ ແລະ ອື່ນໆ

ຄ. ປະເພດສັດເຄິ່ງນ້ຳເຄິ່ງບົກມີ: ກົບ, ຂຽດ, ກະປູ, ງູ, ເຕົ່າ.....

**ຂ: ພືດລວມມີ 2 ຈຳພວກ:**

ພືດທີ່ຂະຫຍາຍຢູ່ໃນນ້ຳ ແລະ ພືດທີ່ຂະຫຍາຍຕົວຢູ່ໃນບົກ.

+ ພືດຈັດເປັນ 5 ປະເພດຄື: ປະເພດເປັນເຄືອ, ເປັນພຸ່ມ, ພືດຍືນຕົ້ນ, ພືດລົ້ມລຸກ, ພືດຊັ້ນຕ່ຳ ( ໄຄ, ເທົາ, ແໜ... )



+ ພືດຜັກທຸກປະເພດມີການເຕີບໃຫຍ່ ແລະ ຂະຫຍາຍຕົວຕາມລະດູການຂອງມັນ

*ພືດພັນຊະນິດຕ່າງໆທີ່ເກີດຂຶ້ນຕາມທຳມະຊາດລ້ວນແຕ່ມີຄຸນປະໂຫຍດແຕກຕ່າງກັນເຊັ່ນວ່າ:*

*+ ບາງຊະນິດໃຊ້ເປັນອາຫານ.*

*+ ບາງຊະນິດໃຊ້ເປັນຢາປິ່ນປົວພະຍາດຂອງຄົນ ແລະ ສັດ.*

*+ ບາງຊະນິດກໍ່ໃຊ້ເຄື່ອງປະດັບເອ້ຢ້ອງ.*

*+ ບາງຊະນິດກໍ່ນຳໃຊ້ເຂົ້າໃນທາງສາສະໜາ ຫຼື ຮີດຄອງປະເພນີ, ແຕ່ມີບາງຊະນິດກໍ່ເປັນອັນຕະລາຍແກ່ຊີວິດຂອງຄົນ ແລະ ສັດໄດ້.*

**ຄຳທວາຍ.**

**ໜອງສື້ວບໍ່ມີໃບ ໜອງໃສບໍ່ມີນ້ຳ ແມ່ນຫຍັງ ?**

**( ໄຄ , ເທົາ )**

**<u>ບົດກອນ:</u>   ບ້ານນາຜາສຸກ.**

ຢູ່ໃນນ້ຳ   ມີປູມີປາ
ຢູ່ໃນນາ   ມີກົບມີຮວກ
ຊ່າງສະດວກ   ຍາມຊອກຫາກິນ
ຫູໄດ້ຫຍິນ   ສຽງນົກກາຮ້ອງ
ນ້ອງ ແລະ ຂ້ອຍ   ພາຍຖົງລົງທົ່ງ
ເອື້ອຍຫຼັງກົ່ງ   ຫິ້ວຖົງປາຊີວ
ບໍ່ອຶດຫິວ   ຂອງກິນຂອງໃຊ້
ລືມບໍ່ໄດ້   ບ້ານຂ້ອຍຜາສຸກ   ແທ້ແລ້ວ.

**ຈົບ !**

# <u>ບົດທີ 2.</u>

# ຊີວະນາໆພັນໃນທ້ອງຖິ່ນ.

## 1: <u>ການນຳໃຊ້ຊີວະນາໆພັນ.</u>

ໂດຍລວມແລ້ວພົນລະເມືອງລາວສ່ວນຫຼາຍແມ່ນຍັງອາໄສການດຳລົງຊີວິດຕິດພັນກັບຊັບພະຍາກອນທຳມະຊາດ, ຫາກິນຕາມທຳມະຊາດ, ອາໄສພືດ ແລະ ສັດ ທີ່ມີຕາມທ້ອງຖິ່ນເພື່ອເປັນອາຫານ. ຄວາມອຸດົມສົມບູນຂອງຊີວະນາໆພັນໃນແຕ່ລະທ້ອງຖິ່ນມັນມີຄວາມແຕກຕ່າງກັນໄປຕາມສະພາບຂອງທ້ອງຖິ່ນໃຜມັນ, ຊີວະນາໆພັນທີ່ຍັງສາມາດຫາກິນໄດ້ຢູ່ໃນທ້ອງຖິ່ນສ່ວນຫຼາຍແລ້ວກໍ່ແມ່ນພືດຜັກ ແລະ ປູປາທີ່ມີຕາມທຳມະຊາດ.

### 1.1: ປະເພດສັດນ້ຳທີ່ຍັງສາມາດຫາກິນໄດ້ລວມມີ:

ປູ, ປາ, ກຸ້ງ, ຫອຍ, ກົບ, ຂຽດ, ໂຕຮອກ, ໂຕໜ້ງອ, ອຸ່ງນ, ແມງດາ...

ປະເພດສັດນ້ຳທີ່ຫາກິນໄດ້ຍາກ ແລະ ບໍ່ຄ່ອຍຈະພົບເຫັນຢູ່ຕາມແມ່ນ້ຳບ້ານເຮົາລວມມີ: ປາຝາ, ປາເຄິງ, ປາກົດ, ປາຂ້າວ, ປາກ້ອນ, ປາສອງ, ປາແດງ ເຫຼົ່ານີ້ເປັນຕົ້ນ.





### 1.2: ປະເພດພືດຜັກທີ່ຍັງຫາກິນໄດ້ຕາມທຳມະຊາດຍັງມີ:

ກູດ, ຜັກຫວານ, ຜັກເນົ່າ, ຜັກຄາວທອງ, ຜັກໜອກ.

ນອກຈາກນັ້ນກໍ່ຍັງມີໜໍ່ໄມ້ ເຊັ່ນວ່າ: ໜໍ່ບຸ່ນ, ໜໍ່ຫວາຍ, ໜໍ່ຫົກ, ໜໍ່ໄລ່, ໜໍ່ໄຜ່, ໜໍ່ໄລ່, ໜໍ່ລັນ ແລະ ອື່ນໆ.

### 1.3: ປະເພດເຫັດທຳມະຊາດ.



ເຫັດກໍ່ເປັນອາຫານຈາກທຳມະຊາດ ຊະນິດໜຶ່ງທີ່ຊ່ວຍສົ່ງເສີມສຸຂະພາບ, ເຫັດທີ່ມີຕາມທຳມະຊາດລວມມີ:

ເຫັດດ້າງ, ເຫັດເຕັ່ນ, ເຫັດສະມຸ່ນ ເຫັດຕາບ, ເຫັດຖ່ານ ແລະ ອື່ນໆ.

+ ເຫັດທີ່ພວກເຮົານຳມາຈາກ ທຳມະຊາດມີຫຼາຍຢ່າງສາມາດກິນໄດ້, ແຕ່ກໍ່ຍັງມີເຫັດຫຼາຍຊະໜິດທີ່ເປັນເຫັດເບື່ອ, ໃນເມື່ອເຮົາກິນແລ້ວກໍ່ເກີດອັນຕະລາຍເຖິງແກ່ຂັ້ນເສຍຊີວິດໄດ້.

- *ອາຫານທີ່ໄດ້ມາຈາກທຳມະຊາດເຊັ່ນ: ປູ,ປາ,ກຸ້ງ,ຫອຍ, ພືດຜັກ ເປັນປະເພດອາຫານທີ່ມີຄຸນປະໂຫຍດຕໍ່ສຸຂະພາບຫຼາຍທີ່ສຸດ, ຢູ່ຍ່າຕາຍາຍຂອງພວກເຮົາເຄີຍນຳໃຊ້ອາຫານປະເພດດັ່ງກ່າວ ມາແຕ່ດຶກດຳບັນຈົນເຖິງເທົ່າທຸກວັນນີ້. ສະນັ້ນ ມັນຈຶ່ງພາໃຫ້ພວກເພີ່ນມີສຸຂະພາບແຂງແຮງ ແລະ ມີອາຍຸຍືນຍາວ.*

**<u>ຄຳຖາມ.</u>**

1: ຍ້ອນຫຍັງຈຶ່ງເຮັດໃຫ້ຈຳພວກ ປາເຄິງ, ປາຝາ, ປາແຂ້, ປາກ້ອນ... ຫຼຸດໜ້ອຍລົງທຸກມື້ ?

2: ຈົ່ງໄປຖາມຜູ້ເຖົ້າຜູ້ແກ່ເບິ່ງວ່າ: ເຫັດທີ່ເປັນເບື່ອມີເຫັດຫຍັງແດ່ ?

## <u>ບົດກອນ</u>: ໄປເກັບບອນ.

ຂ້ອຍຍັງຈຳຈື່ໄດ້ ອາດີດເກົ່າຄາວຫຼັງ
ຄາວເມື່ອຍັງເປັນເດັກ ຢູ່ເຮືອນຫຼັງນ້ອຍ
ຂ້ອຍມັກໄປນຳເອື້ອຍ ລົງທົ່ງເກັບຜັກ
ເອື້ອຍຂ້ອຍມັກເກັບບອນ ຢູ່ເທິງແຄມນ້ຳ
ສະອອນນຳທາງເອື້ອຍ ມ່ວນຊື່ນເກັບບອນ
ສະອອນນຳໝູ່ປາ ລ່ອງລອຍຕາມນ້ຳ
ຄ່ຳລົງແລງມາແລ້ວ ຈຶ່ງກັບຄືນເຮືອນ
ຂ້ອຍເປັນຄົນຖືຖົງ ຍ່າງຕາມຫຼັງເອື້ອຍ
ບໍ່ໄດ້ເລີຍແວ່ຫຼິ້ນ ຕາມທາງຄ້າງຢູ່
ໝູ່ຄູ່ໃຜກໍ່ຍ້ອງ ຈົນຂ້ອຍຍ່າງບໍ່ເປັນ ນັ້ນແລ້ວ.

**ຈົບ !**

# ບົດທີ 3

# ຖິ່ນຢູ່ອາໄສຂອງຊີວະນາໆພັນ.

## 1: ຊີວະນາໆພັນ ແລະຖິ່ນຢູ່ອາໄສຂອງມັນ.

ຊີວະນາໆພັນມີຢູ່ຕາມພື້ນທີ່ຕ່າງໆເຊັ່ນວ່າ: ຕາມທ້ອງທົ່ງນາ, ຕາມຫ້ວຍຮ່ອງ ໜອງບຶງ, ຕາມພູຜາປ່າດົງ, ຕາມແມ່ນ້ຳລຳເຊ, ຕາມທົ່ງຫຍ້າປ່າຄັງ, ຕາມບໍລິເວນບ້ານ ແລະ ບ່ອນອື່ນໆອີກ.



ຢູ່ຕາມທ້ອງທົ່ງນາກໍ່ລວມມີທັງພືດ ແລະ ສັດເຊັ່ນວ່າ: ກົບຂຽດ, ກະປູ, ຕັກແຕນ, ແມງໄມ້, ມີຜັກໜອກ, ຜັກແວ່ນ, ຜັກຫອມແປ້ນ.... ໂດຍສະເພາະກໍ່ແມ່ນຊ່ວງກ້າວເຂົ້າສູ່ລະດູຝົນ.

ຢູ່ຕາມຫ້ວຍຮ່ອງ, ຄອງບຶງ ແລະ ຕາມແມ່ນ້ຳກໍ່ລ້ວນແຕ່ເປັນຖິ່ນຢູ່ອາໄສຂອງຊີວະນາໆພັນເປັນຕົ້ນແມ່ນ: ປູປາ, ກົບຂຽດ, ກຸ້ງຫອຍ.... ແຕ່ຖ້າຫາກວ່າສາຍນ້ຳເປື້ອນເປິະ ບັນດາ ປູປາ, ກົບຂຽດກໍ່ຈະໜີພ່າຍໄປໝົດ.



ນອກຈາກນັ້ນແລ້ວຊີວະນາໆພັນກໍ່ຍັງມີຢູ່ຕາມທົ່ງຫຍ້າປ່າຄັງ, ຢູ່ຕາມປ່າດົງ, ຕາມບໍລິເວນບ້ານ, ໃນນັ້ນຫຼາຍກວ່າໝູ່ກໍ່ແມ່ນ: ຈຳພວກຕັກແຕນ, ຈິລໍ່, ຈີ່ນາຍ, ໄຂ່ມົດແດງ, ຊິ່ງຄົນຊຽງຂວາງກັນເອີ້ນວ່າ ( ໄຂ່ເມົ່າ ) ແລະ ອື່ນໆ.

## 2: ການແພ່ຜາຍຂອງຊີວະນາໆພັນຕາມພື້ນທີ່ຕ່າງໆ.

ຊີວະນາໆພັນຊະນິດຕ່າງໆ ກ່ອນມັນຈະແພ່ຜາຍ ແລະ ຈະເລີນເຕີບໂຕໄດ້ດີກໍ່ຕໍ່

ເມື່ອມີປ່າໄມ້ໃຫ້ຄວາມຮົ່ມເຢັນ, ມີສາຍນ້ຳທີ່ສະອາດ, ມີຫ້ວຍຮ່ອງທີ່ປັດສະຈາກສານພິດເຄມີ, ຢາປາບສັດຕູພືດ, ປັດສະຈາກການຈູດປ່າ ແລະ ອື່ນໆ.

## **ບົດເຝິກຫັດ.**

ໃຫ້ຕື່ມຄຳເວົ້າໃສ່ບ່ອນຍະຫວ່າງລຸ່ມນີ້:

+ ຊີວະນາໆພັນມີຢູ່.....................................ຫ້ວຍຮ່ອງ..........................

+ ຖ້າສາຍນ້ຳເປື້ອນ ປູປາຈະ............................ຖ້າຈູດປ່າ ພືດ ແລະ ສັດຈະ...
.............................................................................................

**ຄຳທວຍ:**

*ຜູ້ຢູ່ຫ້ວຍສານມອງ, ຜູ້ຢູ່ໜອງກອງກົ້ນ*
*ແມ່ນຫຍັງ ?      ( ແມງມຸມ, ຫອຍ )*

# ບົດທີ 4.

# ເຝິກປະຕິບັດ

# ລົງສຳຫຼວດຄວາມຫຼາກຫຼາຍຂອງຊີວະນາໆພັນ.

## 1: ຄວາມສຳຄັນຂອງການລົງສຳຫຼວດຊີວະນາໆພັນ.

ການລົງສຳຫຼວດຄວາມຫຼາກຫຼາຍຂອງຊີວະນາໆພັນຢູ່ຕາມພື້ນທີ່ຕ່າງໆ ຫຼື ຖິ່ນຢູ່ອາໄສຂອງມັນເຊັ່ນ: ຕາມທົ່ງນາ, ຫ້ວຍຮ່ອງ, ປ່າດົງ... ແມ່ນມີຄວາມສຳຄັນຫຼາຍທີ່ສຸດເພາະວ່າຈະໄດ້ຮູ້ຄວາມຫຼາກຫຼາຍຂອງຊີວະນາໆພັນຢູ່ຕາມແຕ່ລະພື້ນທີ່ຕ່າງໆ, ຈະໄດ້ຮູ້ວ່າມີຊີວະນາໆພັນຈັກຊະໜິດຢູ່ຕາມແຕ່ລະພື້ນທີ່ ? ແຕ່ລະປີມັນຈະເພີ່ມຂຶ້ນຈັກຊະໜິດ.

## 2: ຄຳແນະນຳການລົງສຳຫຼວດຊີວະນາໆພັນ.



ການລົງສຳຫຼວດຊີວະນາໆພັນຢູ່ຕາມແຕ່ລະພື້ນທີ່ແມ່ນໃຫ້ປະຕິບັດປີລະ 1 ຄັ້ງ, ໃຫ້ລົງ 3 ປີຕິດຕໍ່ກັນ, ໃນຂອບເຂດພື້ນທີ່ດຽວກັນ, ວັນ, ເວລາ ດຽວກັນ.

**ຕົວຢ່າງ**:

+ ວັນທີ 10 / 11 / 2013 ລົງສຳຫຼວດຕາມພື້ນທີ່ ແມ່ນ້ຳ.
+ ວັນທີ 10 / 11 / 2014 ກໍ່ໃຫ້ລົງສຳຫຼວດຢູ່ພື້ນທີ່ດຽວກັນ ( ແມ່ນ້ຳ )
+ ວັນທີ 10 / 11 / 2015 ກໍ່ໃຫ້ລົງສຳຫຼວດຢູ່ພື້ນທີ່ດຽວກັນ ( ແມ່ນ້ຳ ).
   - ໃຫ້ເອົາຂໍ້ມູນຈຳນວນຊີວະນາໆພັນ 3 ປີມາສົມທຽບໃສ່ກັນ: ແຕ່ລະປີມັນຈະເພີ່ມຂື້ນຈັກຊະໜິດ ? ຫຼື ຈະຫຼຸດລົງຈັກຊະໜິດ ? ຢູ່ໃນແຕ່ລະພື້ນທີ່ຂອງການລົງສຳຫຼວດ.

## 3: ການບັນທຶກຂໍ້ມູນຊີວະນາໆພັນ.

ພາຍຫຼັງສຳເລັດການລົງສຳຫຼວດຊີວະນາໆພັນຢູ່ຕາມພື້ນທີ່ໃດໜຶ່ງແລ້ວ ກໍ່ໃຫ້ນຳເອົາຈຳນວນຊີວະນາໆພັນທີ່ເກັບໄດ້ນັ້ນມາໂຮມເຂົ້າກັນ, ແລ້ວກໍ່ພາກັນນັບຈຳນວນຊີວະ



ນາໆພັນ ທີ່ເກັບມາໄດ້ນັ້ນວ່າ:
ມີຈັກຊະໜິດແທ້ ? ມີປາຈັກຊະໜິດ
ພືດ ມີຈັກຊະນິດ ?, ຈາກນັ້ນກໍ່
ໃຫ້ບັນທຶກເປັນບັນຊີຄັກແນ່.

## 3: ການລາຍງານຂໍ້ມູນ.

ເມື່ອສຳເລັດການບັນທຶກຂໍ້ມູນ ຈຳນວນຊີວະນາໆພັນແລ້ວກໍ່ໃຫ້ ເຕົ້າໂຮມກັນເພື່ອນຳສະເໜີຂໍ້ມູນທີ່ໄດ້ບັນທຶກຜ່ານມານັ້ນ.

*ຄຳຖາມ*

*1: ຍ້ອນຫຍັງພວກເຮົາຈຶ່ງລົງສຳຫຼວດຊີວະນາໆພັນ ຢູ່ຕາມພື້ນທີ່ຕ່າງໆ ?*

*2: ຍ້ອນຫຍັງຈຳນວນຊີວະນາໆພັນ( ປູປາ, ກົບຂຽດ ) ຈຶ່ງຫຼຸດລົງທຸກມື້ ?*

**ຄຳທວາຍ.**

ໂຕຫຍັງນໍ ? ມີສີ່ຂາຫາມເຮືອນຫຼັງນ້ອຍ ຂື້ນຄ້ອຍກໍ່ເກັ່ງ ລົງນ້ຳກໍ່ໄດ້ ກິນໝາກໄມ້ເປັນອາຫານ.

ໂຕສີ່ຂາ ເກີດລູກອອກມາເປັນໄຂ່ ໃຫຍ່ຂື້ນແລ້ວ ຕາຍຍ້ອນຂາຍສຽງ ແມ່ນຫຍັງ ?

# ບົດທີ 5.

## ການລອດເຫຼືອຂອງຊີວະນາໆພັນ.

### I: ຄວາມຫຼາກຫຼາຍຂອງຊີວະນາໆພັນໃນເມື່ອກ່ອນ.

ຊຽງຂວາງເປັນດິນແດນທີ່ສວຍງາມຕາມທຳມະຊາດ, ມີອາກາດສົດໃສ, ມີພູຜາປ່າໄມ້ທີ່ອຸດົມສົມບູນ, ມີພືດພັນ ແລະ ມີສັດສາວາສິ່ງນາໆຊະໜິດ. ປູ່ຍ່າຕາຍາຍເຄີຍເວົ້າສູ່ຟັງວ່າ:



ໃນເມື່ອກ່ອນຢູ່ບ້ານເຮົາເຄີຍມີ ເສືອ, ສິງ, ຊ້າງ, ມີຄ່າງ, ບ່າງ, ທະນີມີກະຮອກ, ຈອນຟອນ, ມີເໝັ້ນ, ມີຫອນ, ມີກວາງ, ມີຟານ ໄກ່ປ່າ, ໝາໄນ ແລະ ອື່ນໆ.

\+ **ຜູ້ເຖົ້າເຄີຍເວົ້າວ່າ:**

***ຖ້າຢາກກິນແກງປາ ໃຫ້ຄ້າງໝໍ້ໄວ້ກ່ອນ.***

### II: ການປ່ຽນແປງທາງທຳມະຊາດ.

ທຸກມື້ນີ້ຢູ່ທ້ອງຖິ່ນຂອງພວກເຮົາໄດ້ມີການປ່ຽນແປງຫຼາຍຢ່າງເຊັ່ນວ່າ: ປ່າໄມ້ຖືກທຳລາຍ, ສາຍນ້ຳບົກແຫ້ງ ເກີດມີໄພແຫ້ງແລ້ງຢ່າງຮ້າຍແຮງ, ຝົນຕົກບໍ່ຖືກຕາມລະດູການ, ເກີດມີໄຟລ່າມປ່າ, ການຖາງປ່າເຮັດໄຮ່ກໍ່ມີຫຼາຍ, ບາງປີກໍ່ເກີດມີໄພນ້ຳຖ້ວມດັ່ງນີ້ເປັນຕົ້ນ.



## III: ການລອດເຫຼືອຂອງຊີວະນາໆພັນ.

ເນື່ອງຈາກວ່າທຳມະຊາດມີການປ່ຽນແປງຢ່າງຮ້າຍແຮງ ແລະ ການທຳລາຍຊີວະນາໆພັນຂອງກຸ່ມຄົນກໍ່ຫຼາຍຂື້ນທຸກມື້. ດັ່ງນັ້ນ ຊີວະນາໆພັນຊະນິດຕ່າງໆກໍ່ຫຼຸດໜ້ອຍຖອຍລົງທຸກມື້ທຸກວັນ.

**ກິດຈະກຳຄົ້ນຄວ້າ**

- ***ຈົ່ງບອກຊື່ສັດນ້ຳ ແລະ ສັດປ່າຊະນິດຕ່າງໆທີ່ເຄີຍພົບເຫັນຢູ່ເລື້ອຍໆ ແລະ ໂຕສັດທີ່ເຄີຍໄດ້ກິນເປັນອາຫານທຸກມື້ມີໂຕຫຍັງແດ່ ?***

ສັດປ່າ ແລະ ສັດນ້ຳ ທີ່ເຄີຍພົບເຫັນມີໂຕ

+ ສັດປ່າມີໂຕ.............................................
.........................................................
.........................................................
+ ສັດນ້ຳມີໂຕ.............................................
.........................................................
.........................................................
+ ສັດປ່າ ແລະ ສັດນ້ຳທີ່ເຄີຍໄດ້ກິນເປັນອາຫານມີໂຕ.................................................
.........................................................

**<u>ຄຳທວາຍ.</u>**

**ຕ່ອນຊີ້ນດີ ຝັງດິນສາມປີບໍ່ເນົ່າ ແມ່ນຫຍັງ ?**

**( ໂຕອື້ນ, ໂຕລິ່ນ )**

# ບົດທີ 6

## ລະດູການອາຫານໃນທ້ອງຖິ່ນ.

ຢູ່ແຕ່ລະທ້ອງຖິ່ນມັນມີຄວາມແຕກຕ່າງກັນທາງດ້ານພູມລຳເນົາ, ອາກາດ, ທຳມະຊາດ ແລະ ອາຫານການກິນທີ່ເປັນເອກະລັກສະເພາະຂອງແຕ່ລະທ້ອງຖິ່ນມັນກໍ່ມີຄວາມແຕກຕ່າງກັນ, ພ້ອມກັນນັ້ນລະດູການຂອງສັດ ແລະ ພືດ ມັນກໍ່ມີບາງຢ່າງແຕກຕ່າງກັນໂດຍອີງຕາມລະດູການຂອງມັນ.

### 1: ປະເພດອາຫານທີ່ເປັນເອກະລັກຂອງທ້ອງຖິ່ນ.

ປະເພດອາຫານທີ່ເປັນເອກະລັກຂອງທ້ອງຖິ່ນສ່ວນຫຼາຍແລ້ວແມ່ນມາຈາກຊີວະນາໆພັນທຳມະຊາດ.

**ຕົວຢ່າງ**: ອາຫານທີ່ເປັນເອກະລັກທີ່ມີຊື່ສຽງຂອງທ້ອງຖິ່ນຊຽງຂວາງແມ່ນ: ນົກແອ່ນ, ໄຂ່ເນົ່າ, ໝາກຈອງ, ໝາກຄາຍ ເຫຼົ່ານີ້ເປັນຕົ້ນ...



### 2: ລະດູການອາຫານທີ່ເປັນທີ່ມີໃນທ້ອງຖິ່ນຊຽງຂວາງ.

| ລະດູການ | ອາຫານປະເພດສັດ. | ອາຫານປະເພດພືດ. | ປະເພດໝາກໄມ້ |
|---|---|---|---|
| **ລະດູແລ້ງ.** ເດືອນ 11-3 | ປາບູ່, ປາພັນ, ໄຂ່ເນົ່າ | ໃບຈອງ, ໃບສົ້ງ, ໜໍ່ສັນ, ດອກບານ, ດອກຫຼີບ.... | ໝາກເຫຼັ້ງ, ໝາກແຂ່ນ |
| ເດືອນ 4-5 | ປາແຝກ, ປາໃບ.... | ໜໍ່ລັນ, ເຫັດກໍ່... | ໝາກໝັ້ນແກ້ວ, ໝາກຄໍ້. |
| **ລະດູຝົນ.** ເດືອນ 6-10 | ນົກແອ່ນ, ກົບ,ຊຽດ ຕໍ່ດ່ານ, ຕໍ່ແຄະ... | ໜໍ່ຈ້າ, ໜໍ່ລັນ, ໜໍ່ສັນ.... | ໝາກຈອງ, ໝາກຄາຍ ໝາກໝັ້ນ....... |

ອາຫານພື້ນບ້ານຊຽງຂວາງ ກໍ່ເປັນອາຫານປະເພດໜຶ່ງທີ່ມີຊື່ສຽງ, ເປັນອາຫານທີ່ໄດ້ມາຈາກຊີວະນາໆພັນທຳມະຊາດ, ເປັນອາຫານທີ່ມີຄຸນນະພາບຕໍ່ການສົ່ງເສີມສຸຂະພາບ

ເປັນອາຫານທີ່ປັດສະຈາກສານພິດເຄມີ, ມີຊື່ອາຫານບາງຊະໜິດໄດ້ກາຍເປັນອາຫານທີ່ມີລັກສະນະເອກະລັກຂອງຊຽງຂວາງເຊັ່ນວ່າ:

+ ນົກແອ່ນ: ກໍ່ເປັນອາຫານຊະໜິດໜຶ່ງທີ່ຊື່ສຽງຢູ່ໃນທ້ອງຖິ່ນຊຽງຂວາງ.
+ ໄຂ່ເມົາ: ກໍ່ເປັນອາຫານຊະໜິດໜຶ່ງ, ຊຶ່ງຄົນຊຽງຂວາງຖືວ່າເປັນອາຫານພິເສດ.
+ ໝາກຈອງ, ໝາກຄາຍ: ກໍ່ກາຍເປັນໝາກໄມ້ທີ່ມີລົດຊາດແຊບຊ້ອຍ ແລະ ກໍ່ໄດ້ກາຍເປັນໝາກໄມ້ທີ່ເປັນເອກະລັກຂອງຊຽງຂວາງ.
+ ໝາກຄໍ້: ເປັນປະເພດໝາກໄມ້ທີ່ຫາຍາກຢູ່ໃນທ້ອງຖິ່ນອື່ນໆ, ຄົນຊຽງຂວາງຖືວ່າເປັນອາຫານລັກພິເສດຂອງເຂົາເຈົ້າ.
+ ໜໍ່ສັນ: ກໍ່ຫາໄດ້ຍາກຢູ່ໃນທ້ອງຖິ່ນອື່ນໆ, ໜໍ່ສັນເປັນຊື່ໜໍ່ໄມ້ປະເພດໜຶ່ງ ແລະ ບໍ່ພຽງແຕ່ເປັນໜໍ່ໄມ້ທີ່ມີລົດຊາດແຊບນົວເທົ່ານັ້ນ ຍັງສາມາດປຸງແຕ່ງເປັນອາຫານໄດ້ຫຼາຍປະເພດຕື່ມອີກ.

**<u>ຄຳຖາມ:</u>**

1: ອາຫານທີ່ເປັນເອກະລັກຂອງທ້ອງຖິ່ນຊຽງຂວາງມີຫຍັງແດ່ ?

2: ໝາກໄມ້ທີ່ເປັນເອກະລັກຂອງຊຽງຂວາງມີໝາກຫຍັງແດ່ ?

**<u>ບົດກອນ</u>: ໝາກຈອງ.**

ບ້ານຂອງຂ້ອຍ ລືຊື່ໝາກຈອງ
ໝາກຄາຍຫວານ ລຽບຕາມແຄມບ້ານ
ນານປີແລ້ວ ໝາກຈອງມີຊື່
ຄືໝາກໄມ້ພື້ນບ້ານ ປະດັບເອ້ຂວາງຊຽງ ນັ້ນແລ້ວ.

# ບົດທີ 7.

## ເຝິກປະຕິບັດ

## ລົງສຳຫຼວດຊີວະນາໆພັນຢູ່ຕາມທົ່ງນາ ແລະ ຫ້ວຍຮ່ອງ.

### 1: ຄວາມສຳຄັນຂອງການລົງສຳຫຼວດຊີວະນາໆພັນ.

ການລົງສຳຫຼວດຄວາມຫຼາກຫຼາຍຂອງຊີວະນາໆພັນຢູ່ຕາມພື້ນທີ່ທ້ອງທົ່ງນາ ແລະ ຫ້ວຍຮ່ອງໜອງບຶງກໍ່ເປັນສິ່ງໜຶ່ງທີ່ສຳຄັນ, ເນື່ອງຈາກວ່າສອງພື້ນທີ່ດັ່ງກ່າວກໍ່ເປັນບ່ອນໜຶ່ງຊຶ່ງຊາວບ້ານລົງຊອກຫາຊີວະນາໆພັນເພື່ອມາເປັນອາຫານ, ໂດຍສະເພາະແລ້ວກໍ່ແມ່ນຊາວບ້ານທີ່ອາໄສດຳລົງຊີວິດຢູ່ເຂດຊົນນະບົດ. ການລົງສຳຫຼວດຈະໄດ້ຮູ້ຄວາມຫຼາກຫຼາຍຂອງຊີວະນາໆພັນຢູ່ຕາມແຕ່ລະພື້ນທີ່ ດັ່ງກ່າວມາຂ້າງເທິງນັ້ນ.

### 2: ຄຳແນະນຳການລົງສຳຫຼວດຊີວະນາໆພັນ.

ກ່ອນຈະປະຕິບັດການລົງສຳຫຼວດຊີວະນາໆພັນຕາມ 2 ພື້ນທີ່ ຈະຕ້ອງໄດ້ແບ່ງນັກຮຽນອອກເປັນ 2 ກຸ່ມ: ກຸ່ມໜຶ່ງລົງສຳຫຼວດຕາມທົ່ງນາ ແລະ ອີກກຸ່ມໜຶ່ງລົງຕາມຫ້ວຍຮ່ອງໜອງບຶງ, ສ່ວນວ່າວິທີການເກັບກຳຂໍ້ມູນແມ່ນໃຫ້ປະຕິບັດຕາມທີ່ເຄີຍໄດ້ປະຕິບັດຜ່ານມານັ້ນ.



ການລົງສຳຫຼວດຊີວະນາໆພັນຢູ່ຕາມແຕ່ລະພື້ນທີ່ແມ່ນໃຫ້ປະຕິບັດປີລະ 1 ຄັ້ງ, ໃຫ້ລົງ 3 ປີຕິດຕໍ່ກັນ, ໃນຂອບເຂດພື້ນທີ່ດຽວກັນ, ວັນ, ເວລາ ດຽວກັນ.

**ຕົວຢ່າງ**:

+ ວັນທີ 15 / 2 / 2014 ລົງສຳຫຼວດຕາມພື້ນທີ່ ທົ່ງນາ, ຫ້ວຍຮ່ອງ
+ ວັນທີ 15 / 2 / 2015 ກໍ່ໃຫ້ລົງສຳຫຼວດຢູ່ພື້ນທີ່ດຽວກັນ ( ທົ່ງນາ ແລະ ຫ້ວຍຮ່ອງ )
+ ວັນທີ 15 / 2 / 2016 ກໍ່ໃຫ້ລົງສຳຫຼວດຢູ່ພື້ນທີ່ດຽວກັນ ( ທົ່ງນາ ແລະຫ້ວຍຮ່ອງ)

ຂັ້ນຕອນ ແລະ ວິທີການລົງສຳຫຼວດຊີວະນາໆພັນຢູ່ຕາມຫ້ວຍຮ່ອງ ກໍ່ໃຫ້ປະຕິບັດຄືດັ່ງທີ່ໄດ້ແນະນຳຜ່ານມາຢູ່ຂັ້ນເທິງນັ້ນ.

ໃຫ້ເອົາຂໍ້ມູນຈຳນວນຊີວະນາໆພັນ 3 ປີມາສົມທຽບໃສ່ກັນ: ແຕ່ລະປີມັນຈະເພີ່ມຂຶ້ນຈັກຊະນິດ ຫຼື ຈະຫຼຸດລົງຈັກຊະນິດ ? ຢູ່ໃນແຕ່ລະພື້ນທີ່ຂອງການລົງສຳຫຼວດ.



### 3: ການລາຍງານຂໍ້ມູນ.

ເມື່ອສຳເລັດການບັນທຶກຂໍ້ມູນຈຳນວນຊີວະນາໆພັນແລ້ວກໍ່ໃຫ້ເຕົ້າໂຮມກັນເພື່ອນຳມາສະເໜີຂໍ້ມູນທີ່ໄດ້ບັນທຶກຜ່ານມານັ້ນ.

ເມື່ອສຳການລາຍງານຂໍ້ມູນກ່ຽວກັບຈຳນວນຊີວະນາໆພັນທີ່ໄດ້ພົບເຫັນແລ້ວ, ຜູ້ນຳພາ ( ຄູ ) ກໍ່ໃຫ້ນັກຮຽນຈັດລຽງບຸລິມະສິດຄວາມສຳຄັນຂອງພືດ ແລະ ສັດທີ່ເກັບມາໄດ້ນັ້ນວ່າ: ແມ່ນສັດຊະໜິດໃດ ຫຼື ພືດຊະໜິດໃດສຳຄັນກວ່າກັນ ? ຍ້ອນຫຍັງ ?

**ຄຳຖາມ.**

**1: ຍ້ອນຫຍັງຈິ່ງລົງສຳຫຼວດຊີວະນາໆພັນຢູ່ຕາມທົ່ງນາ ແລະ ຫ້ວຍຮ່ອງ ?**

**2: ຍ້ອນຫຍັງທົ່ງນາທີ່ເພິ່ນໃສ່ຝຸ່ນຄອກ ຈິ່ງມີປູປາຫຼາຍກວ່າທົ່ງນາທີ່ເພິ່ນໃສ່ ປຸ໋ຍ ?**

# <u>ບົດທີ 8.</u>

## ການແພ່ພັນຂອງພືດ ແລະ ສັດ

ໂດຍລວມແລ້ວ ພືດ ແລະ ສັດ ມັກຈະແພ່ພັນຢູ່ໃນຊ່ວງລະດູຝົນ, ເພາະເປັນຊ່ວງທີ່ມີຄວາມຊຸ່ມເຢັນ, ອາກາດກໍ່ສົດຊື່ນ, ຢູ່ໃນຊ່ວງຕົ້ນລະດູຝົນພວກເຮົາຈະເຫັນໄຂ່ປາ, ໄຂ່ກົບຂຽດ, ໄຂນົກ ແລະ ອື່ນໆ. ຈາກນັ້ນອີກບໍ່ພໍເທົ່າໃດກໍ່ຈະເຫັນ ປານ້ອຍ, ຂຽດນ້ອຍ, ເຫັນໂຕຮວກນ້ອຍຢູ່ໃນຊ່ວງເດືອນ 5-6 ໃນແຕ່ລະປີ.

### 1: <u>ປັດໃຈສຳຄັນທີ່ພາໃຫ້ສັດນ້ຳແພ່ພັນ.</u>

ນ້ຳແມ່ນປັດໃຈຕົ້ນຕໍທີ່ພາໃຫ້ສັດນ້ຳມີການແພ່ພັນ, ຖ້າສາຍນ້ຳຫາກລ່ອງໄຫຼ ແລະ ປັດສະຈາກຄວາມເປື້ອນເປິະກໍ່ຈະພາໃຫ້ສັດນ້ຳແພ່ພັນໄວ ແລະ ການເຕີບໃຫຍ່ກໍ່ຈະວ່ອງໄວ, ກົງກັບຂ້າມຖ້າສາຍນ້ຳຫາກບົກແຫ້ງ, ມີສິ່ງເປື້ອນເປິມັນກໍ່ຈະເປັນອັນຕະລາຍທີ່ສຸດຕໍ່ການແພ່ພັນຂອງສັດນ້ຳ.



### 2: <u>ປັດໃຈທີ່ພາໃຫ້ສັດປີກແພ່ພັນ.</u>

ສັດປີກຊະໜິດຕ່າງໆເຊັ່ນວ່າ: ນົກ, ໜູ, ກະຮອກ, ຈອນຟອນ, ເຕົ່າ, ແລນ, ໂຕບົ້ງ, ໂຕເຈຍ, ແລະ ໂຕອື່ນໆ, ການແພ່ພັນຂອງສັດເຫຼົ່ານີ້ກໍ່ມີລັກສະນະຄ້າຍຄືກັນ.

ປ່າໄມ້ ແລະ ທົ່ງຫຍ້າປ່າຄັງເປັນປັດໃຈສຳຄັນທີ່ສຸດຂອງການແພ່ພັນຂອງສັດປີກ, ຖ້າຫາກປ່າໄມ້ຕຶບໜາເທົ່າໃດການແພ່ພັນຂອງສັດກໍ່ຍິ່ງຈະເພີ່ມຂື້ນໄວເທົ່ານັ້ນ. ແຕ່ກົງກັນຂ້າມ ຖ້າຫາກຄົນເຮົາທຳລາຍສັດປ່າຫຼາຍເທົ່າໃດ ການແພ່ພັນຂອງສັດປ່າກໍ່ຈະໜ້ອຍລົງຊັກໃຊ້, ໂດຍສະເພາະແມ່ນການໃຊ້ອາວຸດທຳລາຍສັດ ແລະ ອື່ນໆ.

**ຄຳຖາມ**

*1: ລະດູການແພ່ພັນຂອງສັດນ້ຳ ແລະ ສັດປ່າແມ່ນລະດູໃດ ?*

*2: ຍ້ອນຫຍັງເພິ່ນຈິ່ງຫ້າມບໍ່ໃຫ້ທຳລາຍສັດນ້ຳ ແລະ ສັດປ່າໃນໃນລະດູການແພ່ພັນ ? ແລະ ລະດູການແພ່ພັນຂອງສັດນ້ຳ ແລະ ສັດປ່າແມ່ນລະດູໃດ ?*

# ບົດທີ 9

## ເຝິກປະຕິບັດ

## ລົງສຳຫຼວດຊີວະນາໆພັນຕາມປ່າ.

### 1: ຄວາມສຳຄັນ.

ການລົງສຳຫຼວດຄວາມຫຼາກຫຼາຍຂອງຊີວະນາໆພັນຢູ່ຕາມພື້ນທີ່ປ່າດົງ ຫຼື ປ່າເຫຼົ່າກໍ່ເປັນສິ່ງໜຶ່ງທີ່ສຳຄັນ, ເນື່ອງຈາກວ່າສອງພື້ນທີ່ດັ່ງກ່າວກໍ່ເປັນບ່ອນໜຶ່ງຊຶ່ງຊາວບ້ານອອກຊອກຫາຊີວະນາໆພັນເພື່ອມາເປັນອາຫານ, ໂດຍສະເພາະແລ້ວກໍ່ແມ່ນຊາວບ້ານທີ່ອາໄສດຳລົງຊີວິດຢູ່ເຂດຊົນນະບົດ.



### 2: ຄຳແນະນຳການລົງສຳຫຼວດ.

ກ່ອນຈະປະຕິບັດການລົງສຳຫຼວດຊີວະນາໆພັນຕາມພື້ນທີ່ປ່າດົງ ຫຼື ປ່າເຫຼົ່າ... ຜູ້ຮັບຜິດຊອບຕ້ອງໄດ້ໃຫ້ຄຳແນະນຳແກ່ເດັກຢ່າງລະອຽດ,ໂດຍສະເພາະແລ້ວກໍ່ແມ່ນການເກັບກຳເອົາຊີວະນາໆພັນປະເພດ ສັດ, ມີສັດບາງຊະໜິດກໍ່ບໍ່ສາມາດຈັບເອົາມາໄດ້ເຊັ່ນວ່າ: ໂຕນົກ, ແມງໄມ້ທີ່ເປັນພິດໄພ, ໂຕງູ, ຂີ້ເຂັບ, ແມງງອດ .... ສິ່ງສຳຄັນແມ່ນໃຫ້ບັນທຶກເກັບກຳເອົາແຕ່ປະເພດຊີວະນາໆພັນທີ່ພວກເຮົາສາມາດນຳມາເປັນອາຫານເທົ່ານັ້ນ.

ສ່ວນວ່າວິທີການເກັບກຳຂໍ້ມູນແມ່ນໃຫ້ປະຕິບັດຕາມທີ່ເຄີຍໄດ້ປະຕິບັດຢູ່ໃນສະຖານທີ່ອື່ນໆຜ່ານມານັ້ນ.



### 3: ການລາຍງານຂໍ້ມູນ.

ເມື່ອສຳເລັດການບັນທຶກຂໍ້ມູນຈຳນວນຊີວະນາໆພັນແລ້ວກໍ່ໃຫ້ເຕົ້າໂຮມກັນເພື່ອນຳມາສະເໜີຂໍ້ມູນທີ່ໄດ້ບັນທຶກຜ່ານມານັ້ນ. ເມື່ອສຳເລັດການລາຍງານຂໍ້ມູນກ່ຽວກັບຈຳ

ນອນຊີວະນາໆພັນທີ່ໄດ້ພົບເຫັນແລ້ວ, ຜູ້ນຳພາ ( ຄູ ) ກໍ່ໃຫ້ນັກຮຽນຈັດລຽງບຸລິມະສິດຄວາມສຳຄັນຂອງພືດ ແລະ ສັດທີ່ເກັບມາໄດ້ນັ້ນວ່າ: ແມ່ນສັດຊະນິດໃດ ຫຼື ພືດຊະນິດໃດສຳຄັນກວ່າກັນ ? ຍ້ອນຫຍັງ ?

- ຈາກນັ້ນ ກໍ່ໃຫ້ສົນທະນາກ່ຽວກັບຄວາມສຳຄັນຂອງມັນເຊັ່ນວ່າ:
  - \+ ແມ່ນພືດຊະນິດໃດສາມາດກິນໄດ້ ? ຊະໜິດໃດເປັນຢາ, ອັນໃດເປັນສິນຄ້າ, ອັນໃດເປັນເຄື່ອງປະດັບເອ້ຍ້ອງ ........

**<u>ບົດກອນ</u>: ຮຽນຮູ້ຈາກປ່າ.**

ມື້ກ່ອນນັ້ນ ຂ້ອຍລົງທົ່ງນາ
ມື້ຕໍ່ມາ ຄູພາທ່ຽວປ່າ
ເຫັນນົກກາ ໝູ່ນອນແມງໄມ້
ເຫັນຕົ້ນໄມ້ ກົກໃຫຍ່ໃບຂຽວ
ຊ່າງກົມກຽວ ມາກມີຫຼາຍລົ້ນ
ມີຮູອົ້ນ ນົກຂວກນົກເຂົາ
ແລ້ວໝູ່ເຮົາ ພາກັນມ່ວນຊື່ນ.
ຄືນຮອດບ້ານ ກໍ່ເວົ້າສູ່ລູງ ເຈົ້າເອີຍ.

**ຈົບ !**

*ຄຳທວາຍ:*

*ໂຕຫຍັງບໍ່ ມີແປດຂາ ຫຼັງຄາຕາກແດດ ?*

*( ກະປູ )*

*ດຳດິນ ບິນບິນ ຄືນມັກກິນເປັນອາຫານ*

*ແມ່ນໂຕຫຍັງ ? ( ຈີ່ລໍ່, ຈີ່ນາຍ )*

# ບົດທີ 10.

## ການທຳລາຍຊີວະນາໆພັນ

### 1: ບັນຫາຂອງຊີວະນາໆພັນ.

ໃນສະພາບປັດຈຸບັນຊີວະນາໆພັນໃນທ້ອງຖິ່ນນັບມື້ຫຼຸດໜ້ອຍລົງ, ເນື່ອງຈາກວ່າທຳມະຊາດຖືກທຳລາຍຢ່າງຮ້າຍແຮງ, ການປ່ຽນແປງທຳມະຊາດກໍ່ເກີດຂື້ນເຊັ່ນວ່າ: ເກີດມີໄພແຫ້ງແລ້ງ, ໄພນ້ຳຖ້ວມ, ແຕ່ສິ່ງທີ່ຮ້າຍແຮງກວ່າໝູ່ແມ່ນມາຈາກການທຳລາຍຂອງຄົນເພື່ອການຫາລ້ຽງຊີບແບບບໍ່ຄິດເຖິງອານາຄົດອັນຍາວນານ.

### 2: ບາງຕົວຢ່າງການທຳລາຍຊີວະນາໆພັນ.

ການຕັດໄມ້ທຳລາຍປ່າ, ການຈູດປ່າ, ການຈູດທົ່ງຫຍ້າປ່າຄັງເປັນສາເຫດຕົ້ນຕໍອີກຢ່າງໜຶ່ງຂອງການທຳລາຍຊີວະນາໆພັນ.



**ໝາຍຄວາມວ່າ**: ຊີວະນາໆພັນທຸກຊະນິດລວມທັງປະເພດພືດ ແລະ ສັດ ຈະຖືກດັບສູນໄປໝົດ.

### 3: ການຫາກິນທີ່ເປັນການທຳລາຍຊີວະນາໆພັນ.

ຊີວະນາໆພັນນອກຈາກຈະສູນຫາຍໄປຍ້ອນການປ່ຽນແປງປ່ຽນແປງ ແລະ ການທຳລາຍທຳມະຊາດຂອງມະນຸດແລ້ວ, ສິ່ງທີ່ເປັນອັນຕະລາຍທີ່ສຸດອີກຢ່າງໜຶ່ງກໍ່ແມ່ນມາຈາກການການນຳໃຊ້ເຄື່ອງມື ແລະ ອຸປະກອນການຫາກິນທີ່ເປັນການທຳລາຍຊີວະນາໆພັນເຊັ່ນ: ການນຳໃຊ້ລູກລະເບີດ,



ລູກປືນເພື່ອທຳລາຍສັດ, ການນຳໃຊ້ຢາ ແລະສານພິດເຄມີຊະໜິດຕ່າງໆເພື່ອຫາລ່າສັດເຫຼົ່ານີ້ເປັນຕົ້ນ...

## ບົດເຝິກຫັດ

***ສາເຫດລຸ່ມນີ້ ແມ່ນຫຍັງທີ່ເປັນການທຳລາຍຊີວະນາໆພັນຫຼາຍກວ່າໝູ່ ? ຍ້ອນຫຍັງ ?***

| ການປ່ຽນແປງທຳມະຊາດ | ການທຳລາຍປ່າໄມ້ | ການນຳໃຊ້ເຄື່ອງມືຫາກິນທີ່ບໍ່ຖືກຕ້ອງ. |
|---|---|---|
| ------------------------------ | ------------------------------ | -------------------------- |
| ------------------------------ | ------------------------------ | -------------------------- |
| ------------------------------ | ------------------------------ | -------------------------- |
| ------------------------------ | ------------------------------ | -------------------------- |
| ----------------------------- | ------------------------------ | -------------------------- |

# ບົດທີ 11.

## ຫາກິນຊ່ວຍພໍ່ແມ່.

### 1: ຄວາມສຳຄັນຂອງການອອກແຮງງານ.

ການອອກແຮງງານເປັນສິ່ງທີ່ມີກຽດ ແລະ ມີຄວາມສຳຄັນທີ່ສຸດຕໍ່ກັບການມີຊີວິດຂອງຄົນຜູ້ໜຶ່ງ. ການອອກແຮງງານຈະຊ່ວຍໃຫ້ເຮົາມີສຸຂະພາບແຂງແຮງ ແລະ ຈະຊ່ວຍໃຫ້ພວກເຮົາມີແນວຄວາມຄິດປະດິດສ້າງໃນຫຼາຍແງ່ຫຼາຍທາງ, ດັ່ງຄຳສຸພາສິດເຄີຍສອນວ່າ: **ນອນຫົວຄ່ຳຕື່ນສວຍ ຄືຄົນຕາຍເທື່ອລະໜ້ອຍ ເທື່ອລະໜ້ອຍ.**



ການອອກແຮງງານຊ່ວຍພໍ່ແມ່ເພື່ອການດຳລົງຊີວິດຢູ່ໃນຄອບຄົວເປັນໜ້າທີ່ຂອງໝົດທຸກຄົນ, ໂດຍອີງຕາມຄວາມສາມາດຂອງໃຜມັນ ເຊັ່ນວ່າ: ເກືອເປັດ ເກືອໄກ່, ອະນາໄມເຮືອນຊານ, ລ້າງຖ້ວຍລ້າງບ່ວງ ແລະ ອື່ນໆ.

ທັງໝົດນີ້ ມັນຈະຊ່ວຍໃຫ້ຄອບມີຊີວິດຊີວາ ມີຄວາມສາມັກຄີ, ມີບັນຍາກາດ ແລະ ມີຄວາມອຸດົມສົມບູນດີຂື້ນ.

### 2: ການຫາກິນທີ່ຖືກຕ້ອງ.

ບົດຕົວຢ່າງ:

**ເລື່ອງ: ທ້າວ ຄຳດີ ດຸໝັ່ນ.**



ເປັນຄວາມສຸກທີ່ພາບພູມໃຈທີ່ສຸດຂອງທ້າວ ຄຳດີ ທີ່ໄດ້ດຳລົງຊີວິດຢູ່ບ້ານນ້ອຍຊົນນະບົດແຫ່ງໜຶ່ງ ທີ່ມີທຳມະຊາດສວາຍງາມ, ມີຫ້ວຍນ້ຳວັງປາ ມີພູຜາປ່າໄມ້ທີ່ສົດຊື່ນ. ປີນີ້ ຄຳດີ ຮຽນຢູ່ຫ້ອງ ປ4 ມີລົດຖີບຄັນໜຶ່ງເປັນເພື່ອນ ຂີ່ໄປ

ໂຮງຮຽນທຸກມື້ທຸກວັນບໍ່ໄດ້ຂາດ. ນາຍຄູ ແລະ ໝູ່ຄູ່ໃຜໆກໍ່ຍ້ອງຍໍວ່າ: ທ້າວ ຄຳດີ ນອກຈາກຈະເປັນເດັກທີ່ຮຽນເກັ່ງແລ້ວ ຍັງເປັນຄົນທີ່ມີນິດໄສສຸພາບຮຽບຮ້ອຍ ແລະ ເປັນຄົນມັກມ່ວນນຳອີກ.

ຫຼັງຈາກເລີກຮຽນແລ້ວ, ຄຳດີ ກໍ່ຟ້າວຈັບລົດຖີບພາຍຖົງແດງຂີ່ລົດຖີບກັບບ້ານ ດ້ວຍຄວາມເບີກບານ. ການຫ້າງສ້ອນຫ້າງໄຊ ຖືວ່າເປັນຄວາມສຸກທີ່ຫາສິ່ງປຽບບໍ່ໄດ້ ຂອງ ຄຳດີ. ປ້າ ແລະ ລຸງຂອງລາວຍັງມັກເວົ້າວ່າ: ປາຄໍ່ກໍ່ຖືກໄຊ ປາໄນກໍ່ລົງສ້ອນ ຫຼາຍກວ່າໝູ່ຄືຊິມີແຕ່ຂອງບັກຫຼານຊາຍເຮົານີ້ລະ, ແຕ່ປານນັ້ນຄ່ຳແລງມາຍັງຟ້າວເກືອເປັດ ເກືອໄກ່ຊ່ວຍພໍ່ແມ່ເປັນປະຈຳ.

ຫຼັງຈາກກິນເຂົ້າແລງແລ້ວກໍ່ທາຮຽນໜັງສື, ທ້າວຄຳດີ ຍັງເປັນຄົນມັກແຕ້ມຮູບ, ມັກຟັງເລົ່ານິທານພື້ນບ້ານ, ມັກອ່ານບົດທ່ອງຂື້ນໃຈ ແລະ ອື່ນໆນຳອີກ.

**ຄຳຖາມ:**

1: ຍ້ອນຫຍັງການອອກແຮງງານຈຶ່ງພາໃຫ້ເຮົາມີສຸຂະພາບແຂງແຮງດີ ?

2: ຍ້ອນຫຍັງຄົນທັງຫຼາຍຈຶ່ງມັກກິນອາຫານຈາກທຳມະຊາດຫຼາຍກວ່າມັກກິນອາຫານສຳເລັດຮູບ ?

## ຄຳທວຍ.

ຍາມຄ່ຳເປັນເຫງັນ, ກາງເວັນເປັນນົກເຄົ້າ, ຕື່ນເຊົ້າເປັນແມວລາຍ

ມີຄວາມໝາຍວ່າແນວໃດ ?

*( ຄົນຂີ້ຄ້ານ, ຄົນຄິດບໍ່ດີ )*

# ບົດທີ 12.

## ອາຫານສົ່ງເສີມສຸຂະພາບ.

### 1: ຄວາມສຳຄັນຂອງອາຫານ.

ອາຫານເປັນປັດໃຈສຳຄັນທີ່ສຸດຕໍ່ກັບການສົ່ງເສີມສຸຂະພາບ, ເຮັດໃຫ້ຄົນເຮົາມີສຸຂະພາບແຂງແຮງ ແລະ ເຕີບໃຫຍ່ຂະຫຍາຍຕົວສົມສ່ວນຕາມເກນອາຍຸຂອງໃຜລາວ. ອາຫານທີ່ໄດ້ມາຈາກທຳມະຊາດເຊັ່ນ: ພືດຜັກ, ຜົນລະໄມ້ ແລະ ຊີ້ນສັດນາໆຊະນິດເປັນອາຫານທີ່ມີຄຸນປະໂຫຍດຫຼາຍທີ່ສຸດຕໍ່ກັບການສົ່ງເສີມສຸຂະພາບ. ອາຫານທີ່ໄດ້ມາຈາກຊີວະນາໆພັນທຳມະຊາດກໍ່ມີຫຼາຍປະເພດ, ຫຼາຍຊະນິດ ແລະ ປະເພດອາຫານດັ່ງກ່າວກໍ່ມີຫຼາຍໆຢ່າງທີ່ມີຄຸນປະໂຫຍດ ແລະ ກໍ່ມີບາງຢ່າງກໍ່ເປັນພິດໄພເຊັ່ນດຽວກັນ

**ຕົວຢ່າງ**: ມີເຫັດບາງຊະໜິດກໍ່ບໍ່ສາມາດກິນໄດ້, ຖ້າກິນໄປແລ້ວກໍ່ຈະພາໃຫ້ເບື່ອເມົາຈົນເຖິງຂັ້ນເສຍຊີວິດກໍ່ເປັນໄປໄດ້ ແລະ ມີແມງໄມ້ບາງຊະໜິດກໍ່ບໍ່ສາມາດກິນເປັນອາຫານໄດ້ເຊັ່ນວ່າ: ແມງໄມ້ທີ່ເປັນສີເຫຼືອງ, ສີເຫຼື້ອມ, ສີດຳ ແລະ ສີຂາວ, ຊະໜິດແມງໄມ້ທີ່ກ່າວມານັ້ນ ກໍ່ບໍ່ຄວນສ່ຽງທີ່ຈະກິນເປັນອາຫານ.

### 2: ອາຫານສົ່ງເສີມສຸຂະພາບ.

ອາຫານທີ່ໄດ້ມາຈາກທຳມະຊາດເປັນອາຫານປອດສານພິດ ແລະ ເປັນອາຫານທີ່ທຸກຄົນມີຄວາມຕ້ອງການທີ່ສຸດ ເປັນຕົ້ນກໍ່ແມ່ນ: ປູ, ປາ, ກຸ້ງ, ຫອຍ, ນົກ, ເຈຍ, ພືດຜັກປ່ານາໆຊະນິດ.

ທັງໝົດນີ້ກໍ່ລ້ວນແຕ່ແມ່ນຊີວະນາໆພັນທຳມະຊາດ.



\+ ມາເຖິງປັດຈຸບັນນີ້ອາຫານທີ່ໄດ້ມາຈາກທຳມະຊາດເລີ່ມຈະຫາຍາກເຂົ້າທຸກວັນ, ທັງນີ້ກໍ່ເນື່ອງຈາກວ່າຈຳນວນປະຊາກອນກໍ່ເພີ່ມຂຶ້ນທຸກມື້ ແລະ ຈຳນວນຄົນບໍ່ດີຍັງສືບຕໍ່ທຳລາຍຊັບພະຍາກອນທຳມະຊາດຢ່າງຮ້າຍແຮງ, ໂດຍສະເພາະແມ່ນດ້ານຊີວະນາໆ

ພັນທຳມະຊາດ ທີ່ມີຢູ່ໃນແຕ່ລະທ້ອງຖິ່ນ.

### 3: <u>ປະເພດອາຫານສຳເລັດຮູບ</u>.

ປະເພດອາຫານທີ່ຫາຊື້ຕາມທ້ອງຕະຫຼາດມີຫຼາຍຊະນິດເປັນອາຫານສຳເລັດຮູບ ເຊັ່ນວ່າ: ປ່ອງຊີ້ນ, ປ່ອງປາ, ປາເອືອບ ເຫຼົ່ານີ້ເປັນຕົ້ນ. ອາຫານປະເພດນີ້ສ່ວນຫຼາຍແລ້ວແມ່ນຜະລິດມາເປັນເວລາດົນນານ ແລະ ກໍ່ບໍ່ແມ່ນອາຫານສົດທີ່ມາຈາກທຳມະຊາດ, ມີບາງຢ່າງກໍ່ໝົດກຳນົດການນຳໃຊ້ໄປແລ້ວ, ມີບາງຢ່າງກໍ່ເສຍຄຸນ ກາຍເປັນອາຫານບູດເນົ່າ ພາໃຫ້ມີຜົນກະທົບຕໍ່ສຸຂະພາບໃນເມື່ອເຮົາຮັບປະທານລົງໄປ.



- ເວົ້າລວມແລ້ວ, ອາຫານທີ່ໄດ້ມາຈາກຊີວະນາໆພັນທຳມະຊາດ ຈະເປັນອາຫານທີ່ມີຄຸນປະຫຼາຍຕໍ່ສຸຂະພາບຄົນເຮົາຫຼາຍທີ່ສຸດ.

ດັ່ງນັ້ນ ພວກເຮົາທຸກຄົນຕ້ອງພ້ອມກັນອະນຸລັກຮັກສາຊີວະນາໆພັນໃນທ້ອງຖິ່ນໃຫ້ແຜ່ພັນຫຼາຍຂຶ້ນ, ຮູ້ກິນ, ຮູ້ໃຊ້ ຮູ້ຈັ່ງໄວ້ເຮັດແນວ.

### ***<u>ຄຳທວາຍ.</u>***

*+ ເຖິງຍາມຄ່ຳຫາກິນໝົດກິນແນງ ເຖິງຍາມນອນປີ້ນຫົວລົງລຸ່ມ ແມ່ນຫຍັງ?*

*( ໂຕເຈຍ )*

*+ ໜອງນ້ອຍໆ ອ້ອມດ້ວຍດອກເຫຼັກ ແມ່ນຫຍັງ ? ( ປ່ອງປາ ).*

# <u>ບົດທີ 13.</u>

## ຄວາມສຸກບ້ານເຮົາ.

### 1: <u>ຄວາມສຳຄັນຂອງບ້ານເກີດ.</u>

ທຸກຄົນເກີດມາລ້ວນແຕ່ປາຖະໜາຫາຄວາມສຸກ, ຄວາມສຸກແມ່ນຄວາມພໍໃຈຂອງແຕ່ລະຄົນ ແລະ ກໍ່ບໍ່ມີຄວາມສຸກໃດໆເທົ່າກັບຄວາມສຸກທີ່ໄດ້ຢູ່ໃກ້ກັບບ້ານເກີດເມືອງນອນຂອງຕົນ, ໄດ້ດຳລົງຊີວິດຕິດພັນກັບທຳມະຊາດໃນທ້ອງຖິ່ນ, ມີອາຫານການກິນທີ່ອຸດົມສົມບູນ ແລະ ມີຄວາມເບີກບານມ່ວນຊື່ນກັບບ້ານເກີດເມືອງນອນຂອງຕົນ.

ບ້ານເກີດ ແມ່ນຖິ່ນກຳເນີດຂອງເຮົາທີ່ບໍ່ສາມາດຈະຫຼົງລືມໄດ້, ແມ່ນບ່ອນຝັງສາຍແຫ່ແຜ່ສາຍບື, ລືມບ້ານເກີດຂອງຕົນກໍ່ເໝືອນກັບວ່າລືມຕົນເອງ.

### 2: <u>ຮັກບ້ານເກີດ.</u>



ບ້ານເກີດຂອງເຮົາແມ່ນເຮົາເປັນເຈົ້າຂອງ. ຮັກບ້ານເກີດເມືອງນອນແມ່ນເລີ່ມຈາກການຮັກພໍ່ແມ່, ຮັກພີ່ນ້ອງ,ຮັກທ້ອງຖິ່ນດິນນາ, ຮັກພູຜາປ່າໄມ້, ຮັກພູມພາບທຳມະຊາດ, ຮັກຫ້ວຍນ້ຳວັງປາ, ຮັກບ່ອນທຳມາຫາກິນຂອງຊາວບ້ານ, ເປັນເຈົ້າການຮັກສາບໍ່ໃຫ້ຄົນຂ້າງນອກເຂົ້າມາທຳລາຍຊັບພະຍາກອນຂອງບ້ານ, ບໍ່ຕ້ານຕໍ່ລະບຽບກົດໝາຍບ້ານເມືອງ.

- **ເວົ້າລວມແລ້ວ** ຖ້າບ້ານເກີດເມືອງນອນຂອງເຮົາມີຄວາມອຸດົມສົມບູນທາງດ້ານຊັບພະຍາກອນທຳມະຊາດເທົ່າໃດ ກໍ່ໝາຍຄວາມວ່າເຮົາມີຊີວິດການເປັນຢູ່ທີ່ອຸດົມສົມບູນ, ມີຄວາມສາມັກຄີ, ມີຄວາມເບີກບານມ່ວນຊື່ນ ແລະ ສິ່ງທັງໝົດນັ້ນເອີ້ນວ່າ**ຄວາມສຸກຂອງບ້ານເຮົາ.**

# ບົດເຝິກຫັດ.

ສິ່ງຕ່າງໆລຸ່ມນີ້ແມ່ນຫຍັງທີ່ພາໃຫ້ບ້ານເຮົາ

ມີຄວາມສຸກຫຼາຍກວ່າໝູ່ ? ຍ້ອນຫຍັງ ?

| ຄວາມເບີກບານມ່ວນຊື່ນ ຢູ່ພາຍໃນບ້ານ | ມີຫ້ວຍນ້ຳວັງປາ ແລະ ບ່ອນທຳມາຫາກິນ. | ມີອາຫານການກິນພຽງພໍ |
|---|---|---|
| .................................... | .................................... | .................................... |
| .................................... | .................................... | .................................... |
| .................................... | .................................... | .................................... |
| .................................... | .................................... | .................................... |
| .................................... | .................................... | .................................... |
| .................................... | .................................... | .................................... |

# ບົດທີ 14.

# ລະບຽບກົດໝາຍທ້ອງຖິ່ນ.

## 1: ຄວາມສຳຄັນຂອງລະບຽບກົດໝາຍທ້ອງຖິ່ນ.

ລະບຽບກົດໝາຍທ້ອງຖິ່ນແມ່ນທ້ອງຖິ່ນສ້າງຂຶ້ນມາ ໂດຍອີງໃສ່ລະບຽບກົດໝາຍທີ່ຂັ້ນເທິງວາງອອກ. ທັງໝົດນັ້ນກໍ່ເພື່ອເປັນການຄຸ້ມຄອງຊັບສົມບັດຂອງທ້ອງຖິ່ນ, ຄຸ້ມຄອງການປະຕິບັດໜ້າທີ່, ຄຸ້ມຄອງວັດທະນະທຳ - ສັງຄົມ, ແລະ ການດຳລົງຊີວິດຂອງປະຊາຊົນໃນທ້ອງຖິ່ນ, ເຮັດໃຫ້ທຸກຄົນໃນທ້ອງຖິ່ນຢູ່ຮ່ວມກັນໄດ້ ແລະ ມີການດຳລົງຊີວິດຢູ່ຮ່ວມກັນຢ່າງມີຄວາມສຸກ.



ຢູ່ທ້ອງຖິ່ນໃດຫາກມີລະບຽບກົດໝາຍ ແລະ ມີການຈັດຕັ້ງປະຕິບັດໄດ້ດີກໍ່ຈະເຮັດໃຫ້ທ້ອງຖິ່ນນັ້ນມີຄວາມສະຫງົບ, ມີຄວາມສາມັກຄີ, ມີຄວາມອຸດົມຮັ່ງມີຍິ່ງຂຶ້ນ ຊັບພະຍາກອນທຳມະຊາດກໍ່ຈະບໍ່ຖືກທຳລາຍ ຕະຫຼອດຮອດພືດ ແລະ ສັດ ນາໆຊະນິດກໍ່ຈະແພ່ພັນຫຼາຍຂຶ້ນທຸກມື້...

ການປະຕິບັດລະບຽບກົດໝາຍແມ່ນໜ້າທີ່ຂອງໝົດທຸກຄົນໃນສັງຄົມ, ຜູ້ໃດຫາກຝ່າຝືນກໍ່ຈະຖືກປະຕິບັດວິໄນ ແລະ ລົງໂທດຕາມຄວາມຜິດສະຖານໜັກ ຫຼື ເບົາຕາມກັນໄປ.

## 2: ລະບຽບຄຸ້ມຄອງຊັບພະຍາກອນທ້ອງຖິ່ນ.

ຊັບພະຍາກອນໃນທ້ອງຖິ່ນລວມມີ: ຊັບພະຍາກອນມະນຸດ ( ຄົນ ) ແລະ ຊັບພະຍາກອນທຳມະຊາດທີ່ມີຢູ່ໃນທ້ອງຖິ່ນ, ໃນນັ້ນກໍ່ລວມມີພູຜາປ່າໄມ້, ແມ່ນນ້ຳລຳເຊ, ສັດນ້ຳ, ສັດບົກ, ພືດຜັກນາໆຊະນິດ ຫຼື ເອີ້ນວ່າຊີວະນາໆພັນທຳມະຊາດ ເຫຼົ່ານີ້ເປັນຕົ້ນ.

- ຢູ່ແຕ່ລະທ້ອງຖິ່ນກໍ່ລ້ວນແຕ່ມີລະບຽບຄຸ້ມຄອງຊັບພະຍາກອນທຳມະຊາດຂອງແຕ່ລະທ້ອງຖິ່ນເຊັ່ນວ່າ:

1: ຫ້າມບໍ່ໃຫ້ຕັດໄມ້ທຳລາຍປ່າໃນເຂດຫວງຫ້າມ ແລະ ເຂດປ່າສະຫງວນຢ່າງເດັດຂາດ.

2: ຫ້າມຈູດປ່າ ແລະ ທິ້ງຫຍ້າປ່າຄັງ ( ຖ້າພົບເຫັນຈະຖືກປັບໃໝ)

3: ຫ້າມບໍ່ໃຫ້ໃຊ້ອາວຸດສົງຄາມ ແລະ ລູກລະເບີດທຸກຊະນິດເພື່ອທຳລາຍສັດນ້ຳ ສັດປ່າທຸກປະເພດ.



4: ຫ້າມນຳໃຊ້ສານເຄມີທຸກປະເພດເພື່ອທຳລາຍສັດນ້ຳສັດປ່າທຸກປະເພດ.

5: ຫ້າມບໍ່ໃຫ້ລ່າສັດ,ໂດຍສະເພາະແມ່ນສັດປະເພດຫວງຫ້າມ,ສັດໃນເຂດປ່າສະຫງວນ ແລະ ວັງສະຫງວນ.

6: ຫ້າມລ່າສັດຍາມແພ່ພັນ, ໂດຍສະເພາະແມ່ນຍາມເຂົ້າພັນສາ, ຖ້າຜູ້ໃດລະເມີດຈະຖືກປັບໃໝ ແລະ ລົງໂທດຕາມສະຖານໜັກເບົາ.

***ບົດກອນ: ນ້ຳຕາລີງນ້ອຍ.***

ນັ່ງລະທົມບົ່ນຊ້ຳ ວິໂຍກໂສກເທິງກະຕໍ
ມອງໝູ່ເມໂຄໄຫຼ ຜ່ານແລວລົມຕ້ອງ
ມອງເບິ່ງແນວນາມໄມ້ ລູກຂະພັນຕັດຕ່ອນ
ນາໂຖນັ່ງຊຶມເສົ້າ ເພາະຮາມຮ້າງຮົ່ມໄຮ.
ຄັນບໍ່ເສຍດາຍຕົ້ນໄມ້ ກໍ່ຄວນເມດຕາສັດ
ຊາດທີ່ເນົາໃນໄພ ຕື່ນຕາຍຍ້ອນພານລ່າ
ສັດນາໆພັນກັ້ງງ ຖືກເຜົາໄປພ້ອມປ່າ
ຢາກຟັງສຽງນົກຮ້ອງ ກໍ່ຄອຍລ້າຖ້າບໍ່ມີ ນັ້ນແລ້

*ຈົບ !*

# <u>ບົດທີ 15</u>.

# ທວນຄືນຄວາມຮູ້ກ່ຽວກັບຊີວະນາໆພັນ.

## 1: <u>ຄວາມສຳຄັນຂອງຊີວະນາໆພັນ.</u>

ຊີວະນາໆພັນ ກະສິກຳ ໝາຍເຖິງຄວາມຫຼາກຫຼາຍຂອງສິ່ງທີ່ມີຊີວິດ ລວມທັງ ພືດ ແລະ ສັດທີ່ມີຢູ່ຕາມທ້ອງທົ່ງນາ, ຕາມຫ້ວຍຮ່ອງໜອງບຶງ, ຕາມແມ່ນ້ຳ, ຕາມປ່າດົງ, ຕາມທົ່ງຫຍ້າປ່າຄັງ ແລະ ບ່ອນອື່ນໆ.



ຊີວະນາໆພັນ ທຳມະຊາດ ນອກຈາກຈະນຳໃຊ້ເປັນອາຫານທີ່ມີຄຸນປະໂຫຍດຕໍ່ການສົ່ງເສີມສຸຂະພາບແລ້ວ, ຊີວະນາໆພັນຍັງນຳໃຊ້ເປັນສິນຄ້າ, ມີບາງຢ່າງຍັງໃຊ້ເປັນຢາປົວພະຍາດ, ມີຫຼາຍຢ່າງຍັງໃຊ້ເປັນເຄື່ອງປະດັບປະດາເອ້ຢ້ອງ ແລະ ມີບາງຢ່າງຍັງໃຊ້ເຂົ້າໃນທາງສາສະໜາ ຫຼື ຮີດຄອງປະເພນີ.

## 2: <u>ສະພາບບັນຫາຂອງຊີວະນາໆພັນ ຢູ່ໃນທ້ອງຖິ່ນ.</u>

ໃນສະພາບປັດຈຸບັນຊີວະນາໆພັນຢູ່ໃນທ້ອງຖິ່ນນັບມື້ນັບຫຼຸດໜ້ອຍຖອຍລົງທຸກມື້ທຸກວັນ.



ສາເຫດທີ່ພາໃຫ້ຊີວະນາໆພັນຢູ່ໃນທ້ອງຖິ່ນໝົດໄປກໍ່ເນື່ອງຈາກວ່າປະຊາກອນເພີ່ມຂຶ້ນຢ່າງວ່ອງໄວ, ປ່າໄມ້ຖືກທຳລາຍຢ່າງຮ້າຍແຮງ, ພ້ອມກັນນັ້ນກໍ່ຍັງມີກຸ່ມຄົນຜູ້ບໍ່ຫວັງດີຈຳນວນໜຶ່ງໄດ້ນຳໃຊ້ເຄື່ອງມືຫາກິນແບບຜິດກົດໝາຍ, ໂດຍສະເພາະແມ່ນອາວຸດສົງຄາມ ແລະ ສານພິດເຄມີຊະນິດຕ່າງໆ ຊຶ່ງເຄື່ອງມືດັ່ງກ່າວມັນເປັນການທຳລາຍຊີວະນາໆພັນທຳມະຊາດແບບດັບສູນ.

ຖ້າຫາກຊີວະນາໆພັນໝົດໄປກໍ່ຈະເຮັດໃຫ້ການດຳລົງຊີວິດຂອງພວກເຮົາພົບບັນຫາ

ໃນເລື່ອງຄວາມອຶດຫິວ, ໂດຍສະເພາະແລ້ວກໍ່ແມ່ນຊຸມຊົນທີ່ອາໄສດຳລົງຊີວິດຢູ່ໃນທ້ອງຖິ່ນ.

### 3: <u>ການຄຸ້ມຄອງຊີວະນາໆພັນ.</u>

ຊີວະນາໆພັນເປັນປັດໃຈສຳຄັນຫຼາຍໃຫ້ແກ່ການດຳລົງຊີວິດຂອງພວກເຮົາ, ໂດຍສະເພາະກໍ່ເພື່ອນຳໃຊ້ເພື່ອເປັນອາຫານການກິນທຸກມື້ທຸກວັນ, ຊີວະນາໆພັນທຳມະຊາດເປັນປະເພດອາຫານທີ່ມີຄຸນປະໂຫຍດທີ່ສຸດໃຫ້ແກ່ການສົ່ງເສີມສຸຂະພາບ ທັງເປັນອາຫານປອດສານພິດນຳອີກ.

ຖ້າຊີວະນາໆພັນໝົດໄປມັນກໍ່ຈະສ້າງບັນຫາໃຫ້ແກ່ພວກເຮົາຫຼາຍທີ່ສຸດ, ໂດຍສະເພາະກໍ່ແມ່ນບັນຫາການຂາດແຄນອາຫານ. ດັ່ງນັ້ນ ຕ້ອງມີການຄຸ້ມຄອງຊີວະນາໆພັນເປັນຢ່າງດີ, ການຄຸ້ມຄອງທີ່ດີໝາຍຄວາມວ່າທຸກຄົນຕ້ອງເປັນເຈົ້າການປະຕິບັດລະບຽບກົດໝາຍຄຸ້ມຄອງຊີວະນາໆພັນໃນທ້ອງຖິ່ນຢ່າງເຂັ້ມງວດ, ຕິດຕາມການເຄື່ອນໄຫວຂອງກຸ່ມຄົນບໍ່ດີທີ່ເຂົ້າມາທຳລາຍຊີວະນາໆພັນຢູ່ໃນທ້ອງຖິ່ນຂອງເຮົາ, ຄວນນຳໃຊ້ເຄື່ອງມືຫາກິນແບບດັ້ງເດີມທີ່ພໍ່ແມ່ເຄີຍນຳໃຊ້ຜ່ານມາ, ເຊັ່ນວ່າ: ການນຳໃຊ້ສ້ອນ, ໃຊ້ໄຊ, ຫວ່ານແຫໃສ່ມອງ ເພື່ອຫາປາເຫຼົ່ານີ້ເປັນຕົ້ນ...

*ຄຳຖາມ*

*1: ຍ້ອນສາຍເຫດຫຍັງແດ່ທີ່ພາໃຫ້ຊີວະນາໆພັນໃນທ້ອງຖິ່ນຫຼຸດໜ້ອຍລົງທຸກມື້ ?*

*2: ຢາກຮັກສາຊີວະນາໆພັນບໍ່ໃຫ້ມັນໝົດໄປເຮົາຕ້ອງເຮັດແນວໃດ ?*

ກະຊວງສຶກສາທິການ ແລະ ກິລາ.

ພະແນກສຶກສາທິການ ແລະ ກິລາ

ແຂວງຊຽງຂວາງ

# ຫຼັກສູດທ້ອງຖິ່ນ

## ເລື່ອງ: ຄວາມສຳຄັນຂອງຊີວະນາໆພັນ.

ສຳລັບຊັ້ນປະຖົມປີທີ ປ5.





<u>ຈັດທຳໂດຍ</u>: ຄະນະຮັບຜິດຊອບການສ້າງຫຼັກສູດທ້ອງຖິ່ນ

ພະແນກສຶກສາທິການ ແລະ ກິລາແຂວງຊຽງຂວາງ.

<u>ສະໜັບສະໜູນໂດຍ</u>: ໂຄງການພັດທະນາລະບົບການຜະລິດແບບນິເວດ

ກະສິກຳຢູ່ເຂດພູດອຍພາກເໜືອຂອງ ສ.ປ.ປ ລາວ

( TABI )

# ບົດທີ 1.

## ປັດໃຈສຳຄັນຂອງການມີຊີວິດ.

### 1: ຊີວິດ ແລະ ຄວາມຕ້ອງການ.

ມະນຸດແຕ່ລະຄົນມີຄວາມຕ້ອງການແຕກຕ່າງກັນ, ມີຫຼາຍຢ່າງກໍ່ແມ່ນຄວາມຈຳເປັນເພື່ອການດຳລົງຊີວິດ ແລະ ມີບາງຢ່າງກໍ່ເປັນພຽງແຕ່ຄວາມຕ້ອງການເທົ່ານັ້ນ.



+ ຄວາມຕ້ອງການແມ່ນທຸກສິ່ງທຸກຢ່າງທີ່ຄົນເຮົາຕ້ອງການຢາກໄດ້ຢາກມີເຊັ່ນວ່າ: ຢາກມີລົດຄັນງາມ, ຢາກມີເຮືອນຫຼັງໃຫຍ່, ຕ້ອງການເຄື່ອງນຸ່ງຫົ່ມ ແລະ ຕ້ອງການວັດຖຸເງິນຄຳຢ່າງຫຼວງຫຼາຍ ແລະ ອື່ນໆ. ໝາຍຄວາມວ່າ: ຄວາມຕ້ອງການຂອງແຕ່ລະຄົນບໍ່ຄືກັນ, **ແຕ່ຄວາມຕ້ອງການ ແລະ ຄວາມຈຳເປັນມັນບໍ່ຄືກັນ.**

+ ຄວາມຈຳເປັນແມ່ນສິ່ງທີ່ຄົນເຮົາຂາດບໍ່ໄດ້, ໝາຍຄວາມວ່າຖ້າບໍ່ມີສິ່ງນັ້ນໆ ແມ່ນບໍ່ສາມາດດຳລົງຊີວິດໄດ້. ເວົ້າລວມແລ້ວ ສິ່ງທີ່ມີຄວາມຈຳເປັນເພື່ອການດຳລົງຊີວິດລວມມີ 4 ປະການ ເຊັ່ນຄື:



1: ອາຫານການກິນ.
2: ທີ່ຢູ່ອາໄສ.
3: ເຄື່ອງນຸ່ງຫົ່ມ.
4: ຢາປົວພະຍາດ.

ນອກຈາກປັດໃຈທັງ 4 ແລ້ວພວກເຮົາຍັງຕ້ອງການອົບອຸ່ນທາງດ້ານຈິດໃຈ ແລະ ກຳລັງໃຈນຳອີກ.

## 2: ພື້ນຖານການມີຊີວິດອັນຍືນຍາວ.

ສຸພາສິດເຄີຍກ່າວໄວ້ວ່າ:

*ເຖິງຈະມີເງິນລ້ານ ເງິນແສນກໍ່ບໍ່ມີຄວາມໝາຍຖ້າຮ່າງກາຍບໍ່ແຂງແຮງ.*

ດັ່ງນັ້ນ ທຸກຄົນເກີດມາໃຜໆກໍ່ຕ້ອງການມີຄວາມສຸກ, ຕ້ອງການມີຊີວິດອັນຍືນຍາວ, ແຕ່ຢ່າງໃດກໍ່ຕາມປັດໃຈສຳຄັນອີກສິ່ງໜຶ່ງທີ່ພາໃຫ້ຄົນເຮົາມີຊີວິດອັນຍືນຍາວນັ້ນກໍ່ຄືການໃຊ້ຊີວິດເປັນໄປຕາມທຳມະຊາດ, ຢູ່ກັບສະພາບແວດລ້ອມທີ່ດີເຊັ່ນວ່າ: ຢູ່ກັບທຳມະຊາດທີ່ສົດໃສ, ມີສາຍນ້ຳທີ່ສະອາດ, ມີອາຫານການກິນທີ່ມາຈາກທຳມະຊາດ ເປັນອາຫານທີ່ປອດສານພິດ, ຊຶ່ງຈະຊ່ວຍໃຫ້ພວກເຮົາມີສຸຂະພາບແຂງແຮງ.

*ຄຳກອນ: ປັດໃຈທັງ 4.*

*ຄຳວ່າມະນຸດນັ້ນ ມີຄວາມຕ້ອງການຮ້ອຍແປດ ສິ່ງແວດລ້ອມເປັນສິ່ງກົດດັນ ສິ່ງສຳຄັນຄືປັດໃຈທັງ 4 ລວມຢູ່ໜີ້ມີຢາປົວພະຍາດ ຂາດບໍ່ໄດ້ແມ່ນເລື່ອງອາຫານ ນັບທັງເຮືອນທັງຊານ ເຄື່ອງນຸ່ງແພພຽງພ້ອມ.*

# ບົດທີ 2.

## ຄວາມຍືນຍາວຂອງຊີວິດ.

### 1: ຄວາມສຳຄັນຂອງຊີວິດ.

ທຸກຄົນເກີດມາ ຖ້າຫາກມີຮ່າງກາຍສົມບູນຄົບຖ້ວນເຊັ່ນວ່າ: ມີຫູ, ມີຕາ, ມີແຂນຂາ, ຕີນມືຄົບຖ້ວນ ຖືວ່າຜູ້ນັ້ນເປັນຄົນສົມບູນແບບໃນຊີວິດ.

ຊີວິດເປັນຂອງມີຄ່າ, ທຸກຄົນເກີດມາລ້ວນແຕ່ປາຖະໜາຢາກໃຫ້ມີຊີວິດຍືນຍາວ, ປັດສະຈາກໂລກໄພໄຂ້ເຈັບນາໆປະການ, ມີຊີວິດແມ່ນມີໝົດທຸກຢ່າງ, ສຸພາສິດເຄີຍສອນວ່າ: ***ມີຮ່າງກາຍສົມບູນ ແມ່ນມີຄໍາໜັກໝື່ນ.***



ດັ່ງນັ້ນ ຄົນເຮົາເກີດມາຕ້ອງຮູ້ຄຸນຄ່າຂອງຊີວິດ, ໝາຍຄວາມວ່າຕ້ອງຮູ້ຮັກຊີວິດ.

ຮັກຊີວິດ ຕ້ອງເຮັດໃຫ້ຊີວິດມີຄວາມຍືນຍາວ ແລະ ມີສຸຂະພາບແຂງແຮງດີ. ຢາກເຮັດໄດ້ຄືແນວນັ້ນກໍ່ຕ້ອງດຸໝັ່ນອອກກຳລັງກາຍ, ທຳຈິດໃຈໃຫ້ມີຄວາມສະຫງົບ, ລະມັດລະວັງຕໍ່ການເຄື່ອນໄຫວທີ່ເປັນພຶດຕິກຳສ່ຽງຕ່າງໆ, ເອົາໃຈໃສ່ເລື່ອງອາຫານການກິນທີ່ມີຄຸນນະພາບ.

### 2: ປັດໃຈສຳຄັນທີ່ພາໃຫ້ຊີວິດຍືນຍາວ.

ສິ່ງສຳຄັນທີ່ທີ່ຈະພາໃຫ້ຄົນເຮົາມີອາຍຸຍືນຍາວມັນກໍ່ມີຫຼາຍຢ່າງ, ແຕ່ສິ່ງທີ່ຂາດບໍ່ໄດ້ນັ້ນກໍ່ແມ່ນປັດໄຈທັງ 4 ( ອາຫານການກິນ, ທີ່ຢູ່ອາໄສ, ເຄື່ອງນຸ່ງຫົ່ມ ແລະ ຢາປົວພະຍາດ ).

ອາຫານການກິນກໍ່ຍິ່ງເປັນສິ່ງສຳຄັນ ທີ່ຈະພາໃຫ້ຄົນເຮົາມີສຸຂະພາບແຂງແຮງ ແລະ ກໍ່ເປັນປັດໃຈສຳຄັນທີ່ພົວພັນເຖິງການມີຊີວິດທີ່ຍືນຍາວ. ປະເພດອາຫານທີ່ທີ່ມີຄຸນນະພາບ ແລະ ຈະຊ່ວຍໃຫ້ເຮົາມີສຸຂະພາບແຂງ ເວົ້າລວມແລ້ວກໍ່ແມ່ນປະເພດອາຫານທີ່ມາຈາກ ຊີວະນາໆພັນທຳມະຊາດ ນັ້ນກໍ່ຄື:

ປູ ປາ ກຸ້ງຫອຍ ແລະ ພືດຜັກ ຊະນິດຕ່າງໆ, ເພາະວ່າອາຫານປະເພດດັ່ງກ່າວເປັນອາຫານສົດ ແລະ ກໍ່ປັດສະຈາກສານພິດເຄມີ ຕົກຄ້າງ.



- ເວົ້າລວມແລ້ວອາຫານເປັນໜຶ່ງໃນປັດໃຈສຳຄັນທີ່ຈະຊ່ວຍໃຫ້ເຮົາມີສຸຂະພາບແຂງແຮງ, ໃນນັ້ນສຳຄັນຫຼາຍກໍ່ແມ່ນກໍ່ແມ່ນອາຫານທີ່ມາຈາກທຳມະຊາດ, ຖ້າຢາກໃຫ້ມີອາຫານທີ່ມາຈາກທຳມະຊາດ, ທຸກຄົນກໍ່ຕ້ອງເອົາໃຈໃສ່ເປັນເຈົ້າການອະນຸລັກຮັກສາຊີວະນາໆພັນທຳມະຊາດໄວ້ໃຫ້ຍືນຍົງ.

## *ບົດເຝິກຫັດ*

ໃຫ້ເອົາຄຳເວົ້າລຸ່ມນີ້ຕໍ່ໃສ່ກັນໃຫ້ເປັນປະໂຫຍກທີ່ມີຄວາມໝາຍ.

*ກິນ* *ສຸຂະພາບ* *ຖືກຕ້ອງ*

*ແຂງແຮງ* *ອາຫານ* *ແລະ*

*ຍືນຍາວ* *ອາຍຸ.*

# ບົດທີ 3.

## ການນຳໃຊ້ຊີວະນາໆພັນ

### 1: ຄວາມຜູກພັນຂອງຄົນກັບຊີວະນາໆພັນ.

ຄົນ ແລະ ຊີວະນາໆພັນ ລ້ວນແມ່ນສິ່ງທີ່ມີຊີວິດເຊັ່ນດຽວກັນ. ຊີວະນາໆພັນປະເພດສັດແມ່ນກິນຊີ້ນ ແລະ ກິນພືດຜັກເປັນອາຫານ, ສ່ວນວ່າຊີວະນາໆພັນປະເພດພືດແມ່ນມອາໄສຝຸ່ນທຸກຊະໜິດເປັນອາຫານ. ສຳລັບມະນຸດພວກເຮົາແລ້ວຊ້ຳພັດຕ້ອງການອາຫານ 5 ໝູ່, ແຕ່ໜຶ່ງໃນຈຳນວນ 5 ໝູ່ນັ້ນນັ້ນກໍ່ແມ່ນອາຫານປະເພດ ຊີ້ນ ແລະ ພືດຜັກ.



ຊີ້ນ ແລະ ພືດຜັກສ່ວນຫຼາຍແລ້ວກໍ່ແມ່ນມາຈາກຊີວະນາໆພັນທີ່ມີຢູ່ຕາມທຳມະຊາດ, ໂດຍສະເພາະແລ້ວກໍ່ແມ່ນຢູ່ຕາມທ້ອງຖິ່ນດິນນາ.

ຄວາມຜູກພັນລະຫວ່າງມະນຸດກັບຊີວະນາໆພັນນອກຈາກຈະນຳໃຊ້ມັນເປັນອາຫານແລ້ວກໍ່ຍັງນຳໃຊ້ເພື່ອສິ່ງອື່ນໆອີກຄືວ່າ: ມີສັດບາງຊະນິດຄົນເຮົາຍັງລ້ຽງໄວ້ເປັນສະເໜຄູນເຮືອນ, ໃຊ້ເພື່ອທາງສາສະໜາ ຫຼື ຮີດຄອງປະເພນີ.



**ຕົວຢ່າງ**: ນົກສາລິກາ, ນົກເຂົາທອງ, ນົກແກ້ວປາກເປັນ, ທະນີ ເຫຼົ່ານີ້ເປັນຕົ້ນ.

**ໝາຍຄວາມວ່າ**:

ຖ້າຫາກທ້ອງຖິ່ນມີທຳມະຊາດທີ່ສວາຍງາມ ແລະ ອຸດົມສົມບູນໄປດ້ວຍສັດນ້ຳ ແລະ ສັດປ່ານາໆພັນ ແມ່ນຈະເຮັດໃຫ້ຄົນຢູ່ໃນທ້ອງຖິ່ນນັ້ນມີຊີວິດຊີວາມີຄວາເບີກບານ

ມ່ວນຊື່ນ, ມີຄວາມສາມັກຄີ ແລະ ກໍ່ເປັນບ້ານທີ່ໜ້າຢູ່.

## 2: ການນຳໃຊ້ຊີວະນາໆພັນ.

ຊີວະນາໆພັນບໍ່ພຽງແຕ່ນຳໃຊ້ເປັນອາຫານເທົ່ານັ້ນ, ສຳຄັນອີກຢ່າງໜຶ່ງຍັງໃຊ້ເປັນເຄື່ອງປະດັບເອ້ຍ້ອງບ້ານເຮືອນຂອງເຮົາ ແລະ ໃຊ້ໃນທາງສາສະໜາ ຫຼື ຮີດຄອງປະເພນີ, ໃຊ້ເປັນຢາປິ່ນປົວພະຍາດນຳອີກ....

**ຕົວຢ່າງ:** ການນຳໃຊ້ເປັນຢາມີຫວ້ານໃຈດຳ, ຜັກຄາວທອງຫວ້ານໄພ, ເຄືອເຂົາຮໍ, ໃບພັ້ງ, ກົກໝາດ....

+ ໃຊ້ໃນທາງສາສະໜາ ແລະ ປະເພນີມີ: ກົກສົ້ມປ່ອຍ, ດອກເສດຖີ, ກົກໝາກຍົມ, ໝາກຄູນ, ກົກຫວ້ານ...

➢ **ເວົ້າລວມແລ້ວ**: ປະຊາຊົນຄົນລາວພວກເຮົາໄດ້ນຳໃຊ້ຊີວະນາໆພັນເພື່ອການດຳລົງຊີວິດມາແຕ່ດຶກດຳບັນຈົນເທົ້າທຸກວັນນີ້ ແລະ ກໍ່ບໍ່ສາມາດຈະຕັດແຍກຈາກມັນໄດ້.

ດັ່ງນັ້ນ ຕ້ອງຮູ້ຄຸນຄ່າຂອງຊີວະນາໆພັນ, ຮູ້ອະນຸລັກຮັກສາໄວ້ໃຫ້ມັນຍືນຍາວ ຮູ້ນຳໃຊ້ ຮູ້ຈັ່ງໄວ້ເຮັດໜໍ່ເຮັດແນວ.

*ຄຳທວາຍ*: *ມື້ຍັງນ້ອຍເປັນໜອນ ນອນຢູ່ເຮືອນພັນຫ້ອງ, ໃຫຍ່ຂື້ນແລ້ວມີປີກບິນໄປ ມີຄືນລົບກວນໄລ່ສັບໄລ່ຕອດ ( ແມ່ນຫຍັງ ? )*

*( ຕໍ່, ແຕນ, ແມງເຜິ້ງ )*

# ບົດທີ 4.

## ເຝິກປະຕິບັດ.

## ລົງສຳຫຼວດຊີວະນາໆພັນ ແລະ ສຶກສາຄວາມສຳຄັນຂອງມັນ

### 1: ເປົ້າໝາຍຂອງກິດຈະກຳ.

ເປົ້າໝາຍຂອງການລົງສຳຫຼວດຄວາມຫຼາກຫຼາຍຂອງຊີວະນາໆພັນ ຕາມພື້ນທີ່ໃດໜຶ່ງທີ່ຊາວບ້ານເຄີຍຊອກຢູ່ຫາກິນເປັນປະຈຳມີຈຸດປະສົງຢູ່ 2 ຢ່າງຄື:

- ໃຫ້ເດັກຮຽນຮູ້ຄວາມຫຼາກຫຼາຍຂອງຊີວະນາໆພັນຢູ່ພື້ນທີ່ນັ້ນວ່າ: ມີສັດຈັກຊະນິດ ? ຄືຊະນິດໃດແດ່ ? ໃຫ້ບອກຊື່ຂອງມັນ ແລະ ມີພືດຈັກຊະນິດ ? ຄືຊະນິດໃດແດ່ ? ໃຫ້ບອກຊື່ຂອງມັນ.
- ໃຫ້ຈັດລຽງລຳດັບຄວາມສຳຄັນຂອງພືດ ແລະ ສັດ ແຕ່ລະຊະນິດວ່າ: ມີພືດ ຫຼື ສັດ ຊະນິດໃດມີຄວາມສຳຄັນກວ່າກັນ ? ຍ້ອນຫຍັງ ? ຮັບໃຊ້ໄດ້ຫຍັງແດ່ ? ( ເວົ້າສະເພາະແມ່ນສິ່ງທີ່ກ່ຽວພັນກັບການດຳລົງຊີວິດຂອງເຮົາ )

❖ **ຄຳແນະນຳ:**



ກ່ອນຈະລົງສຳຫຼວດ ອາດຈະແບ່ງນັກຮຽນອອກເປັນ 2 ກຸ່ມ

**ກຸ່ມທີ 1**: ໃຫ້ຊອກຫາຊີວະນາໆປະເພດສັດທີ່ຄົນເຮົານຳໃຊ້ເພື່ອເປັນອາຫານແຕ່ລະວັນ ເຊັ່ນ: ປູປາ, ກຸ້ງຫອຍ, ໜ້ຽວ, ຮອກ, ຊຸດ....

( ຫ້າມເກັບເອົາໂຕປີງ, ໂຕງູ...)

**ກຸ່ມທີ 2**: ໃຫ້ຊອກຫາຊີວະນາໆປະເພດພືດທີ່ຄົນເຮົານຳໃຊ້ເປັນອາຫານເຊັ່ນວ່າ: ແໜ, ໄຄ, ເທົາ, ທີ່ມີຕາມແມ່ນ້ຳ ຫຼື ຕາມແຄມແມ່ນນ້ຳ.

( ຫ້າມເກັບເອົາພືດຜັກທີ່ບໍ່ສາມາດກິນເປັນອາຫານໄດ້ )

## 2: ສຶກສາຄວາມສຳຄັນຂອງຊີວະນາໆພັນ.



ນຳພາເດັກນັກຮຽນຈົດບັນຊີລາຍຊື່ຈຳນວນພືດທີ່ເຂົາເກັບມາໄດ້ນັ້ນວ່າ ມີຈັກຊະໜິດ ? ແຕ່ລະຊະນິດມີຊື່ວ່າແນວໃດ ? ແລະ ຈົດຈຳນວນສັດທີ່ເຂົາເກັບມາໄດ້ນັ້ນມີຈັກຊະໜິດ ?ແຕ່ລະຊະໜິດ/ໂຕ ມີຊື່ແນວໃດ ?

- ເມື່ອສຳເລັດແລ້ວກໍ່ນຳພາເດັກບອກຄວາມສຳຄັນຂອງສັດ ແລະ ພືດແຕ່ລະຊະໜິດ ພ້ອມພາກັນຈັດລຽງບຸລິມະສິດຄວາມສຳຄັນຂອງມັນ.

**ໝາຍເຫດ**: ໃນເວລາລົງສຳຫຼວດຊີວະນາໆພັນປະເພດສັດ, ເດັກບໍ່ອາດສາມາດເກັບມາໄດ້ໝົດທຸກຢ່າງ, ດັ່ງນັ້ນ ກໍ່ໃຫ້ເຂົາເຈົ້າຂອກຊື່ໂຕສັດທີ່ເຂົາພົບເຫັນເພື່ອລາຍງານເຂົ້າໃນບັນຊີກໍ່ໄດ້ແລ້ວ.

### ບົດເຝິກຫັດ

### ຈົ່ງໄປຖາມພໍ່ແມ່ ອ້າຍເອື້ອຍນ້ອງ ແລ້ວຕອບຄຳຖາມລຸ່ມນີ້:

| ມີໂຕປາຫຍັງແດ່ທີ່ມີຢູ່ໃນແມ່ນ້ຳບ້ານເຮົາ ? | ປັດຈຸບັນ ມີໂຕປາຫຍັງທີ່ໝົດໄປແລ້ວ ? | ຍ້ອນຫຍັງປາດັ່ງກ່າວຈຶ່ງໝົດໄປ ? |
|---|---|---|
| ..................................... | ..................................... | ..................................... |
| .................................... | .................................... | .................................... |
| .................................... | .................................... | .................................... |
| ..................................... | ..................................... | ..................................... |
| .................................... | .................................... | .................................... |
| .................................. | .................................... | .................................... |

# <u>ບົດທີ່ 5.</u>

## ຕົ້ນໄມ້ເປັນຢາ.

### 1: <u>ຄວາມສຳຄັນຂອງຢາພື້ນເມືອງ.</u>

ຢາພື້ນເມືອງເປັນຢາຊະໜິດໜຶ່ງທີ່ຜະລິດດ້ວຍຕົ້ນໄມ້ເພື່ອປິ່ນປົວພະຍາດຫຼາຍຢ່າງທີ່ເກີດຂຶ້ນກັບຄົນເຮົາ.



ຫຼາຍເຊັ່ນຄົນມາແລ້ວຕັ້ງແຕ່ປູ່ຍ່າຕາຍາຍເປັນຕົ້ນມາເພິ່ນເຄີຍນຳໃຊ້ຢາພື້ນເມືອງເພື່ອປິ່ນປົວຄົນເຈັບໃນຫຼາຍກໍລະນີເຊັ່ນວ່າ: ເປັນໄຂ້, ເຈັບຫົວ, ເຈັບທ້ອງ, ເປັນວິນ, ເປັນບາດ, ເປັນແຜເຫຼົ່ານີ້ເປັນຕົ້ນ.

ປະເພດຕົ້ນໄມ້ດັ່ງກ່າວກໍ່ມີຢູ່ຕາມທ້ອງຖິ່ນດິນນາຂອງພວກເຮົາ, ທັງນີ້ກໍ່ເນື່ອງຈາກວ່າຢູ່ບ້ານເຮົາຍັງມີຄວາມອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ. ມາຮອດປັດຈຸບັນນີ້ການນຳໃຊ້ຕົ້ນໄມ້ເພື່ອປຸງແຕ່ງເປັນຢາພື້ນເມືອງແມ່ນໄດ້ຮັບການສົ່ງເສີມຫຼາຍທີ່ສຸດ, ບໍ່ວ່າຢູ່ພາຍໃນ ແລະ ຕ່າງປະເທດ.

### 2: <u>ການນຳໃຊ້ຢາພື້ນເມືອງປິ່ນປົວພະຍາດ.</u>

ການດຳລົງຊີວິດຢູ່ໃນຂົງເຂດຊົນນະບົດຍິ່ງມີຄວາມສຳຄັນຫຼາຍໃນການນຳໃຊ້ຢາພື້ນເມືອງເພື່ອປິ່ນປົວສຸຂະພາບເນື່ອງຈາກວ່າພວກເຮົາຢູ່ຫ່າງໄກຈາກໂຮງໝໍ.

ທີ່ຜ່ານມາຫຼາຍຄົນຍັງເຂົ້າໃຈວ່າການນຳໃຊ້ຢາພື້ນເມືອງເພື່ອປິ່ນປົວສຸຂະພາບແມ່ນບໍ່ມີປະສິດທິຜົນ,ເລີຍໄປຊອກຫາຊື້ ແລະ ກິນຢາຫຼວງຢ່າງຊະຊາຍໂດຍບໍ່ປະຕິບັດຕາມຄຳແພດສັ່ງ, ມີບາງຄັ້ງກໍ່ອາດຜິດພາດໄປຈົນເຖິງຂັ້ນອັນຕະລາຍແກ່ຊີວິດ ແລະ ມີບາງຄັ້ງກໍ່ມີຜົນກະທົບແກ່ຊີວິດແບບຍາວນານກໍ່ເປັນໄປໄດ້.

ສຸພາສິດເຄີຍກ່າວໄວ້ວ່າ: ***ໃຊ້ສານພິດ ຊີວິດເປັນໄພ.***

- ບົດຮຽນໃນການນຳໃຊ້ຕົ້ນໄມ້ມາເປັນຢາປິ່ນປົວພະຍາດແມ່ນການ ສືບທອດ ຫຼື ສືບສານພູມປັນຍາທ້ອງຖິ່ນທີ່ພໍ່ແມ່ເຄີຍເຄົາລົບນັບຖື ແລະ ເຄີຍນຳໃຊ້ມາແຕ່ດຶກ

ດຳບັນ ເຫັນວ່າມັນໄດ້ຮັບຜົນຫຼາຍທີ່ສຸດ. ດັ່ງນັ້ນ ພວກເຮົາກໍ່ຄວນສືບຕໍ່ນຳໃຊ້ມັນຕໍ່ໆໄປ.

***ກິດຈະກຳເຝິກປະຕິບັດ.***

*1: ໃຫ້ໂຮງຮຽນພົວພັນກັບຊຸມຊົນຜູ້ທີ່ມີຄວາມຮູ້ທາງດ້ານໝໍຢາພື້ນເມືອງ ເພື່ອນຳພາເດັກນັກຮຽນອອກໄປສຳຫຼວດປ່າໄມ້ບ່ອນໃດໜຶ່ງ ແລ້ວໃຫ້ພໍ່ໝໍແນະນຳບັນດາຕົ້ນໄມ້ທີ່ເປັນຢາຕາມທີ່ໄດ້ພົບເຫັນ, ແລ້ວບອກວ່າ: ແມ່ນຕົ້ນຫຍັງ? ເປັນຢາປົວພະຍາດຫຍັງ? ນຳໃຊ້ແນວໃດປິ່ນປົວ ?*

*2: ນຳພານັກຮຽນສ້າງສວນຢາພື້ນເມືອງຢູ່ໃນໂຮງຮຽນ.*

### ***ຄຳກອນ: ຕົ້ນໄມ້ເປັນຢາ***

ຊື່ຂ້ອຍນີ້ ແມ່ນຕົ້ນສີດາ<br>
ຂ້ອຍເກີດມາ ເປັນຢາດີທ້ອງ<br>
ກ້ອງຮົ່ມຂ້ອຍ ແມ່ນກົກຫຍ້າຂີວ<br>
ລາວເປັນຢາ ປິ່ນປົວມິດບາດ<br>
ຊຸມເຈົ້າອາດ ລືມຫວ້ານໃຈດຳ<br>
ຫຼາຍຄົນຈຳ ຢາດີທ້ອງອືດ<br>
ອີກໜຶ່ງນັ້ນ ຍັງຢາຕຸ່ມຄັນຄາຍ<br>
ຄົນເອີ້ນຫຼາຍ ວ່າໃບໝາກພຸກ<br>
ຕົ້ມໃຫ້ສຸກ ໃສ່ໃບກ້າງປາ<br>
ເອົາໄປທາ ຕຸ່ມຄາຍຫາຍສ້ຽງ<br>
ຕົ້ນບໍ່ກ້ຽງ ແມ່ນຫົວເຂືອງລາຍ<br>
ຄົນເອີ້ນຫຼາຍ ວ່າຢາແຊບເຂົ້າ<br>
ຊຸມໝູ່ເຈົ້າ ຟັງແລ້ວໃຫ້ຄະນຶງ ແດ່ເນີ.

# ບົດທີ່ 6.

## ເຝິກປະຕິບັດ
## ການນຳໃຊ້ຕົ້ນໄມ້ເປັນຢາ.

### 1: ຄວາມສຳຄັນຂອງການປະຕິບັດກິດຈະກຳ.

ກິດຈະກຳເຝິກປະຕິບັດການນຳໃຊ້ຕົ້ນໄມ້ເປັນຢາກໍ່ແມ່ນກິດຈະກຳໜຶ່ງທີ່ເຫັນວ່າມີຄວາມຈຳເປັນໃນການນຳໃຊ້ຊີວະນາໆພັນທີ່ມີຢູ່ຕາມທ້ອງຖິ່ນມາຮັບໃຊ້ໃຫ້ແກ່ການດຳລົງຊີວິດ.



ເປົ້າໝາຍຂອງການເຝິກປະຕິບັດກິດຈະກຳນຳໃຊ້ຕົ້ນໄມ້ເປັນຢາກໍ່ມີຈຸດປະສົງຢູ່ 2 ຢ່າງຄື:

- ເພື່ອເປັນການປູກຈິດສຳນຶກໃຫ້ແກ່ເດັກເຂົ້າໃຈຄຸນປະໂຫຍດ ແລະ ຄວາມສຳຄັນຂອງການນຳໃຊ້ຕົ້ນໄມ້ທີ່ມີຕາມທຳມະຊາດເພື່ອມາຜະລິດເປັນຢາປິ່ນປົວສຸຂະພາບ.
- ໃຫ້ເດັກມີຄວາມເຂົ້າໃຈ ແລະ ສາມາດນຳໃຊ້ຕົ້ນໄມ້ທີ່ມີຢູ່ຕາມທ້ອງຖິ່ນຂອງຕົນເພື່ອມາເປັນຢາປິ່ນປົວຕົນເອງໃນກໍລະນີສຸກເສີນ.

### 2: ການກະກຽມ.

+ ກະກຽມ ຫຼື ພົວພັນຂໍການຊ່ວຍເຫຼືອຈາກໝໍຢາພື້ນເມືອງເພື່ອຊ່ວຍສອນ ແລະ ນຳພານັກຮຽນເຝິກປະຕິບັດຕົວຈິງ.
+ ກຽມສະຖານທີ່ເຝິກປະຕິບັດ.
+ ກຽມຕົ້ນໄມ້ຕາມການແນະນຳຂອງໝໍ.
+ ກະກຽມອຸປະກອນຕ່າງໆຕາມໝໍແນະນຳເຊັ່ນ: ໝໍ້ຕົ້ມຢາ, ພ້າມີດ, ນ້ຳ ໆລໆ.

__ໝາຍເຫດ__: ໃຫ້ເຝິກປະຕິບັດການນຳໃຊ້ຢາປິ່ນປົວພະຍາດຂັ້ນພື້ນຖານເທົ່ານັ້ນກໍ່ພໍແລ້ວເຊັ່ນ: ປົວເລືອດດັງອອກ, ທ້ອງບິດ, ທ້ອງຖອກ, ເປັນອິນ...

## 3: ຂັ້ນຕອນຝຶກປະຕິບັດ.



+ ແນະນຳນັກຮຽນສັງເກດ ແລະ ຕິດຕາມ.
+ ໃຫ້ພໍ່ໝໍແນະນຳການປຸງແຕ່ງຢາພື້ນເມືອງເພື່ອປິ່ນປົວພະຍາດ.
+ ພໍ່ໝໍສາທິດການປຸງແຕ່ງຢາ.
+ ໃຫ້ນັກຮຽນຜັດປ່ຽນກັນປະຕິບັດຕົວຈິງ.
+ ໃຫ້ພໍ່ໝໍແນະນຳການນຳໃຊ້ຢາທີ່ຜະລິດມານັ້ນ.

➢ *ຄູທວນຄືນຄວາມເຂົ້າໃຈ ແລະ ແນະນຳໃຫ້ບັນທຶກເອົາບົດຮຽນການຜະລິດຢາທີ່ໄດ້ຝຶກປະຕິບັດໃນມື້ນີ້ໃສ່ປື້ມຂອງຕົນເອງ.*

***ກິດຈະກຳ***

➢ *ໃຫ້ໂຮງຮຽນຈັດຕັ້ງການສ້າງສວນຢາພື້ນເມືອງຢູ່ໃນໂຮງຮຽນເພື່ອເປັນສວນສຶກສາ ຕາມຄວາມສາມາດທີ່ຈະເປັນໄປໄດ້.*

➢ *ໃຫ້ນັກຮຽນນຳເອົາຕົ້ນໄມ້ເປັນຢາມາປູກຢູ່ໃນສວນຜູ້ລະ 2-3 ຕົ້ນ.*

➢ *ໃຫ້ຂຽນປ້າຍບອກຊື່ຕົ້ນໄມ້ດັ່ງກ່າວວ່າ: ແມ່ນຕົ້ນຫຍັງ ? ເປັນຢາປິ່ນປົວຫຍັງ ?*

➢ *ໃຫ້ຈັດຕັ້ງການປະເມີນຜົນໄດ້ຮັບຂອງການສ້າງສວນດັ່ງກ່າວ.*

➢ *ໃຫ້ຈັດຕັ້ງນຳພາເດັກນັກຮຽນເຂົ້າໄປສຶກສາຕາມແຜນທີ່ໄດ້ວາງໄວ້.*

# ບົດທີ 7.

## ສິນຄ້າຊີວະນາໆພັນ.

### 1: ຄວາມໝາຍຂອງສິນຄ້າຊີວະນາໆພັນ.

ສິນຄ້າຊີວະນາໆພັນແມ່ນປະເພດສິນຄ້າທີ່ນຳມາຈາກຊີວະນາໆພັນກະສິກຳ ທຳມະຊາດເພື່ອວາງຈຳໜ່າຍຢູ່ໃນທ້ອງຕະຫຼາດ ຫຼື ບາງສະຖານທີ່ຕ່າງໆທີ່ເໝາະສົມ. ສິນດັ່ງກ່າວລວມມີສິ່ງທີ່ເປັນວັດຖຸດິບ ແລະ ສິ່ງທີ່ໄດ້ປຸງແຕ່ງສຳເລັດແລ້ວ.

### 2: ປະເພດສິນຄ້າຊີວະນາໆພັນ.

ໂດຍລວມແລ້ວສິນຄ້າຊີວະນາໆພັນໄດ້ແບ່ງອອກເປັນ 4 ປະເພດໃຫຍ່ຄື:

+ ປະເພດທີ່ເປັນວັດຖຸດິບຄື: ສັດນ້ຳ, ສັດບົກ ແລະ ພືດຜັກ.
+ ປະເພດສິນຄ້າທີ່ໄດ້ປຸງແຕ່ງ ຄື: ຜົນຜະລິດກະສິກຳຈາກ ຊີວະນາໆພັນ, ອາຫານການກິນ ແລະ ອື່ນໆ.



*( ຖົ່ງໄຂ່ເປົ່າ )*

ນອກຈາກນັ້ນແລ້ວຍັງມີສິນຄ້າ ຊີວະນາໆພັນບາງຢ່າງທີ່ເພິ່ນ ຫວງຫ້າມບໍ່ໃຫ້ນຳມາຈຳໜ່າຍ ຢູ່ໃນທ້ອງຕະຫຼາດເຊັ່ນວ່າ: ໂຕລີງ, ໂຕຄ່າງ, ເຕົ່າ, ແລນ, ອໍລໍ, ກວາງ, ຟານ, ໂຕລິ່ນ, ສັດນ້ຳບາງຊະນິດ ເຫຼົ່ານີ້ເປັນຕົ້ນ.

➢ **<u>ບາງຕົວຢ່າງ</u>**: ສິນຄ້າຊີວະນາໆພັນປະເພດສັດນ້ຳ ແລະ ສັດບົກປະກອບມີ:

+ ສັດນ້ຳ: ປູປາ, ກຸ້ງຫອຍ, ກົບຂຽດ, ຮອກ, ອຸ່ງນ ...
+ ສັດປ່າ: ນົກ, ບົ້ງ, ບ່າງ, ກະຮອກ, ກະເລັນ, ຈອນຟອນ, ກະທ້າງ, ແມງໄມ້ ...
+ ປະເພດພືດຜັກລວມມີ: ໜໍ່ໄມ້, ເຫັດ, ຜັກປ່າ, ໝາກໄມ້ຊະນິດຕ່າງໆ, ໄຄຫີນ, ເທົາ, ແໜ, ປອດ ....
+ ປະເພດສິນຄ້າທີ່ໄດ້ນຳເອົາຊີວະນາໆພັນ ມາປຸງແຕ່ງສຳເລັດຮູບແລ້ວກໍ່ມີຫຼາຍສິ່ງ ຫຼາຍຢ່າງເປັນຕົ້ນວ່າ:

ກະຕ່າ, ກະບຸງ, ຍູກວດ, ຖົງ, ໄຫ່, ສາດພື້ນບ້ານ, ຕັ່ງຫວາຍ, ເຄື່ອງປະດັບ

ປະດາ, ຢາພື້ນເມືອງ ເຫຼົ່ານີ້ ເປັນຕົ້ນ.

ມາຮອດປັດຈຸບັນນີ້ ປະເພດສິນຄ້າຊີວະນາໆພັນທຳມະຊາດຍິ່ງມີຄຸນຄ່າລາຄາແພງທີ່ສຸດ, ເນື່ອງຈາກວ່າສິນຄ້າປະເພດດັ່ງກ່າວແມ່ນນຳມາຈາກທຳມະຊາດ, ມີລົດຊາດແຊບຊ້ອຍ ແລະ ກໍ່ເປັນສິນຄ້າທີ່ປອດສານພິດເຄມີຕົກຄ້າງ.



*ບົດເຝິກຫັດ*

ໃຫ້ນັກຮຽນຈັດກຸ່ມ ແລ້ວຄິດຕອບຄຳຖາມລຸ່ມນີ້:

| ຍ້ອນຫຍັງສິນຄ້າທີ່ນຳມາຈາກຊີວະນາໆພັນທຳມະຊາດຈຶ່ງມີລາຄາແພງ ? | ສັດນ້ຳ ແລະ ສັດປ່າທີ່ເພິ່ນຫວງຫ້າມມີໂຕຫຍັງແດ່ ? ຍ້ອນຫຍັງ ? |
|---|---|
| + ............................................... | + ............................................... |
| ...................................................... | ...................................................... |
| ...................................................... | ...................................................... |
| ...................................................... | ...................................................... |
| ...................................................... | ...................................................... |

# ບົດທີ 8

## ເຄື່ອງປະດັບທີ່ມີຄ່າ.

### 1: ຄວາມສຳຄັນຂອງການປະດັບເອ້ຍ້ອງ.

ການປະດັບເອ້ຍ້ອງ ເປັນສິນລະປະຂອງຄວາມງາມທີ່ມີສະເໜ່ ຊຶ່ງວ່າທຸກຄົນໃຜໆກໍ່ມີຄວາມຕ້ອງການ, ສຸພາສິດເຄີຍສອນວ່າ: ***ໄກ່ງາມຍ້ອນຂົນ ຄົນງາມຍ້ອນແຕ່ງ***

ດັ່ງນັ້ນ ການຕົບແຕ່ງ ແລະ ປະດັບປະດາເຮືອນຊານໃຫ້ມີຄວາມສວຍງາມ ມັນບໍ່ພຽງແຕ່ມີຄວາມໝາຍເພື່ອຄວາມງາມເທົ່ານັ້ນ, ມັນຍັງເປັນວັດທະນະທຳທີ່ສ່ອງແສງເຖິງຄວາມສີວິໄລທາງດ້ານຈິດໃຈຂອງພວກເຮົານຳອີກ.



ການປະດັບເອ້ຍ້ອງເຮືອນຊານ ແລະ ສະຖານທີ່ຕ່າງໆ ມັນມີຫຼາຍຮູບແບບ ແລະ ມັນກໍ່ມີວັດຖຸອຸປະກອນຫຼາຍປະເພດທີ່ຈະຊ່ວຍເສີມແຕ່ງໃຫ້ມັນມີສີສັນສວຍງາມຫຼາຍຂຶ້ນ.

ປັດຈຸບັນນີ້ຄົນທັງຫຼາຍໄດ້ຫັນມາສົນໃຈກັບການນຳໃຊ້ວັດຖຸສິ່ງຂອງທີ່ນຳມາຈາກທຳມະຊາດ, ໂດຍສະເພາະແລ້ວກໍ່ແມ່ນນຳມາຈາກພູຜາປ່າດົງ ເພື່ອນຳມາຕົບແຕ່ງເອ້ຍ້ອງເຮືອນຊານຫ້າງຮ້ານຕ່າງໆໃຫ້ມີຄວາມສວຍງາມແບບທຳມະຊາດ.

### 2: ເຄື່ອງປະດັບທີ່ມາຈາກປ່າ.

ປະເພດວັດສະດຸທຳມະຊາດທີ່ນຳມາປະດັບເອ້ຍ້ອງເຮືອນຊານກໍ່ມີຫຼາຍປະເພດ, ແຕ່ສິ່ງທີ່ໄດ້ມາຈາກຊີວະນາໆພັນທຳມະຊາດມັນກໍ່ມີຫຼາຍຊະໜິດເຊັ່ນວ່າ: ປູດກົກໄມ້, ເຄືອໝາກແລ້, ເຄືອເຊືອກ, ດອກເຜີ້ງ, ດອກໄມ້ປ່າ, ຫີນໜາມໜໍ່, ຮັງນົກຈອກຟ້າ, ຮັງຕໍ່ຮ້າງ, ດອງເຕົ່າຮ້າງ, ນອກຈາກນີ້ແລ້ວກໍ່ຍັງມີປະເພດກົກໄມ້ທີ່ເພີ່ນນຳໃຊ້ທາງສາສະໜາ ຫຼື ຮີດຄອງປະເພນີ ເຊັ່ນວ່າ: ຫວ້ານກັນຜີ ( ຕາມຄວາມເຊື່ອ ) ຫວ້ານສະເໜຄູນເຮືອນ, ຕົ້ນໄມ້ເສີມລາສີ ແລະ ອື່ນໆ.

➡ ເວົ້າລວມແລ້ວ ຊີວະນາໆພັນ ທີ່ມີຢູ່ຕາມທຳມະຊາດ, ນອກຈາກຈະເປັນອາຫານ, ເປັນສິນຄ້າ ຫຼື ເປັນຢາປິ່ນປົວພະຍາດແລ້ວ, ອີກຢ່າງໜຶ່ງກໍ່ຍັງສາມາດນຳມາເປັນເຄື່ອງປະດັບປະດາເອ້ຍ້ອງທີ່ມີລັກສະນະທຳມະຊາດນຳອີກ, ຊຶ່ງຫຼາຍໆຄົນບໍ່ຄ່ອຍຈະຄຳນຶງເຖິງ ແລະ ເປັນການມອງຂ້າມຫຼາຍກວ່າ.



**ກິດຈະກຳ**

***<u>ເຝິກແອບຂະຫຍາຍຄວາມ.</u>***

+ ໃຫ້ນັກຮຽນຊອກຄຳເວົ້າຕື່ມຕໍ່ປະໂຫຍກລຸ່ມນີ້ໃຫ້ມີຄວາມໝາຍ:



*ກະປູດໄມ້ເອົາມາໄວ້ເພື່ອ....................................*

*ດອກເຜິ້ງເກັບມາໄວ້ເພື່ອ................................*

*ຕົ້ນໄມ້ເປັນຢາເອົາມາເພື່ອ................................*

*ນອກຈາກນັ້ນຍັງເອົາມາໄວ້ເພື່ອ..........................*

# ບົດທີ 9.

## ເຝິກປະຕິບັດ ຫັດຖະກຳພື້ນບ້ານ.

### 1: ຄວາມສຳຄັນຂອງການປະຕິບັດກິດຈະກຳ.

ກິດຈະກຳເຝິກປະຕິບັດການຈັກສານກໍ່ແມ່ນກິດຈະກຳໜຶ່ງທີ່ເຫັນວ່າມີຄວາມສຳຄັນທີ່ຈະໄດ້ນຳພາເດັກນຳໃຊ້ຕົ້ນໄມ້ໄຜ່ທີ່ມີຢູ່ຕາມທ້ອງຖິ່ນມານຳໃຊ້ເຂົ້າໃນການຈັກສານປະເພດຕ່າງໆຕາມຄວາມພ້ອມຂອງເດັກຕາມເກນອາຍຸ.



ເປົ້າໝາຍຂອງການເຝິກປະຕິບັດກິດຈະກຳຈັກສານກໍ່ມີຈຸດປະສົງຢູ່ 2 ຢ່າງຄື:

- ➢ ເພື່ອເປັນການປູກຈິດສຳນຶກໃຫ້ແກ່ເດັກເຂົ້າໃຈຄຸນປະໂຫຍດ ແລະ ຄວາມສຳຄັນຂອງການນຳໃຊ້ຕົ້ນໄມ້ໄຜ່ມາເຮັດຫັດຖະກຳຈັກສານຮັບໃຊ້ການດຳລົງຊີວິດ.
- ➢ ໃຫ້ເດັກມີຄວາມເຂົ້າໃຈ ແລະ ສາມາດນຳໃຊ້ຕົ້ນໄມ້ໄຜ່ທີ່ມີຢູ່ຕາມທ້ອງຖິ່ນຂອງຕົນມາເຮັດຫັດຖະກຳໄດ້ໃນຂັ້ນພື້ນຖານ.

### 2: ການກະກຽມ.

+ ກະກຽມ ຫຼື ພົວພັນຂໍການຊ່ວຍເຫຼືອຈາກຊາວບ້ານຜູ້ມີປະສົບການເພື່ອຊ່ວຍສິດສອນ ແລະ ນຳພານັກຮຽນເຝິກປະຕິບັດຕົວຈິງ.
+ ກຽມສະຖານທີ່ເຝິກປະຕິບັດ.
+ ກຽມໄມ້ໄຜ່ບ້ານຕາມການແນະນຳຂອງຜູ້ທີ່ຈະມາຊ່ວຍ.
+ ກະກຽມອຸປະກອນຕ່າງໆຕາມຄຳແນະນຳເຊັ່ນ: ພ້າ, ມີດ...

**ໝາຍເຫດ**: ໃຫ້ເຝິກປະຕິບັດການຈັກສານຂັ້ນພື້ນຖານເທົ່ານັ້ນກໍ່ພໍແລ້ວເຊັ່ນ: ສານທັບ, ສານກະຕ່າ, ສານສ້ອນ, ສານໄຊ, ຕິບເຂົ້າ, ກະຕ່າໃສ່ຂີ້ເຫຍື້ອ ເຫຼົ່ານີ້ເປັນຕົ້ນ....

### 3: ຂັ້ນຕອນຝຶກປະຕິບັດ.



+ ແນະນຳນັກຮຽນສັງເກດ ແລະ ຕິດຕາມ.
+ ໃຫ້ຊຸມຊົນຜູ້ມາຊ່ວຍສອນ ແນະນຳຂັ້ນຕອນການຈັກສານ ກະຕ່າ ຫຼື ສານອັນໃດອັນໜຶ່ງ.
+ ໃຫ້ຊຸມຊົນສາທິດການປະຕິບັດແຕ່ລະຂັ້ນຕອນ.
+ ໃຫ້ນັກຮຽນແຕ່ລະຄົນ ຫຼື ແຕ່ລະກຸ່ມລົງມືປະຕິບັດຕົວຈິງ.
+ ໃຫ້ຊຸມຊົນ ( ຜູ້ຊ່ວຍສອນ ) ຕິດຕາມ ແລະ ຊ່ວຍເຫຼືອເດັກແຕ່ລະຄົນ.

- *ຄູທວນຄືນຄວາມເຂົ້າໃຈ ແລະ ແນະນຳໃຫ້ສືບຕໍ່ໄປປະຕິບັດຢູ່ບ້ານ, ພ້ອມກັນນັ້ນກໍ່ນຳພານັກຮຽນສົນທະນາກ່ຽວກັບຄວາມສຳຄັນຂອງວຽກງານຫັດຖະກຳຈັກສານ, ຊຶ່ງແມ່ນວຽກງານໜຶ່ງທີ່ພໍ່ແມ່ໄດ້ນຳພາສືບທອດກັນມາຕັ້ງແຕ່ດຶກດຳບັນຈົນເຖິງເທົ້າທຸກວັນນີ້.*

## ຄຳກອນ: ຄ່າຂອງ

ຂ້ອຍຈະເວົ້າ ຄຸນຄ່າຂອງໄຊ

ໄຊໜຶ່ງນັ້ນ ເອົາໄວ້ໃສ່ປາ

ຕາມຄັນນາ ຫ້າງໄວ້ໃສ່ຂຽດ

ກົບມັນບຽດ ລໍຖ້າເຂົ້າໄຊ

ຝົນຕົກໄຫຼ ໃສ່ປາຂຶ້ນລ້ອງ

ຟ້າແດດຮ້ອນ ປາບ້ອນຖືກໄຊ

ໄປທາງໃດ ຫຼາຍຄົນກໍ່ຊ່າ

ເພິ່ນເວົ້າວ່າ ໄຊໂຊກໄຊໝານ

ຍາມກິນທານ ຂຶ້ນເຮືອນຫຼັງໃໝ່

ເພິ່ນແຂວນໃສ່ ຫ້ອຍໄວ້ຄູນເຮືອນ

ສຸກສຳລານ ໂຊກໄຊຄູນຄ້ຳ

ໃຫຍ່ແລະນ້ອຍ ຫັນຫ້າວສານໄຊ ແດ່ທ້ອນ.

***ຈົບ !***

# ບົດທີ 10.

## ການອະນຸລັກຊີວະນາໆພັນ.

### 1: ຄວາມໝາຍຄວາມສຳຄັນຂອງການອະນຸລັກ.

ການອະນຸລັກໝາຍເຖິງ ການຮັກສາໄວ້ໃຫ້ຢູ່ຕາມສະພາວະແບບດັ້ງເດີມ, ການອະນຸລັກໄດ້ກວມເອົາຫຼາຍສິ່ງຫຼາຍຢ່າງທີ່ມີຢູ່ອ້ອມຕົວເຮົາ ລວມທັງສິ່ງທີ່ເບິ່ງເຫັນ ແລະ ເບິ່ງບໍ່ເຫັນ, ແຕ່ໂດຍລວມແລ້ວສິ່ງທີ່ຄວນອະນຸລັກແມ່ນສິ່ງທີ່ເປັນຜົນປະໂຫຍດແກ່ສັງຄົມ, ສິ່ງເປັນມູນເຊື້ອ ແລະ ສິ່ງທີ່ເປັນເອກະລັກສະເພາະຂອງທ້ອງຖິ່ນໃດໜຶ່ງ.

ການອະນຸລັກເປັນສິ່ງສຳຄັນຫຼາຍ, ຖ້າຂາດການອະນຸລັກຮັກສາສິ່ງທີ່ເປັນເອກະລັກຂອງເຮົາໄວ້ ສິ່ງດັ່ງກ່າວກໍ່ຈະສູນຫາຍໄປໝົດ ແລະ ໂອກາດທີ່ມັນຈະກັບຄືນມາໃໝ່ກໍ່ຈະເປັນການຍາກທີ່ສຸດ.

### 2: ການອະນຸລັກຊີວະນາໆພັນ.

ການອະນຸລັກຊີວະນາໆພັນ ກໍ່ເປັນສິ່ງໜຶ່ງທີ່ມີຄວາມຈຳເປັນຫຼາຍທີ່ສຸດ, ມາຮອດປັດຈຸບັນນີ້ເລື່ອງຊີວະນາໆພັນຢູ່ໃນທ້ອງຖິ່ນເຫັນວ່າໄດ້ສູນຫາຍໄປຫຼາຍຊະນິດແລ້ວ, ໂດຍສະເພາະແມ່ນສັດນ້ຳ ແລະ ສັດປ່າ.



*( ເຫັດລິນຈື້ )*

**ຕົວຢ່າງ:**

ເຕົ່າ, ປາຝາ, ອິລໍ, ເຫັ້ຍ, ແລນ, ລິ່ນ ເຫຼົ່ານີ້ເປັນຕົ້ນ.

ການອະນຸລັກຊີວະນາໆພັນບໍ່ໝາຍຄວາມວ່າ: ບໍ່ໃຫ້ກິນ, ບໍ່ໃຫ້ໃຊ້, ບໍ່ໃຫ້ແຕະຕ້ອງ. ພວກເຮົາສາມາດກິນໄດ້, ແຕ່ການຫາກິນແມ່ນບໍ່ໃຫ້ເຮັດສິ່ງທີ່ເປັນການທຳລາຍສັດຈົນດັບສູນ, ຕ້ອງຮູ້ຫາກິນແບບດັ້ງເດີມ, ມີສັດບາງຢ່າງທີ່ເພິ່ນຫວງຫ້າມ ພວກເຮົາກໍ່ບໍ່ຄວນແຕະຕ້ອງມັນ.

**ເລື່ອງສັ້ນ**

## ນາງເຕົ່ານ້ອຍລອດຕາຍ.

ເຊົ້າມື້ໜຶ່ງມີນົກສອງໂຕຈັບຢູ່ເທິງງ່າໄມ້ແຄມຫ້ວຍນ້ຳໃສເຢັນແຫ່ງໜຶ່ງ, ນົກທັງສອງໄດ້ພ້ອມກັນສົ່ງສຽງຮ້ອງຈິກຈອກຈໍແຈ ດ້ວຍຄວາມເບີກບານມ່ວນຊື່ນ, ໃນຂະນະນັ້ນບັງເອີນໄດ້ມີເຕົ່າໂຕໜຶ່ງປ່ອນຫົວອອກມາງອຍແຄມຝັ່ງ. ພໍດີນົກທັງສອງຫຼຽວເຫັນກໍ່ຖາມວ່າ: ນາງເຕົ່ານ້ອຍໜ້າຮັກເອີຍ ! ແມ່ນເຈົ້າເດີນທາງມາຈາກໃສ ? ເບິ່ງແດ່ງເບິ່ງຂາຂອງເຈົ້າຄືມີປອກມັດຢູ່ ? ນາງເຕົ່າຫຍິນແລ້ວກໍ່ເລີຍຮ້ອງຂຶ້ນທັນທີວ່າ: ໂອຍ ! ອ້າຍນົກໃຈດີທັງສອງເອີຍ, ຖ້າຈະເວົ້າເຖິງຂ້ອຍ ສາມມື້ກໍ່ບໍ່ສິ້ນສຸດດອກ ! ຂ້ອຍຈະເລົ່າເຫດການສັ້ນໆທີ່ເກີດຂຶ້ນກັບຂ້ອຍສູ່ເຈົ້າຟັງເນີ ! ເມື່ອກ່ອນຂ້ອຍເຄີຍດຳລົງຊີວິດຢູ່ຮ່ອມຫ້ວຍແຫ່ງໜຶ່ງ, ພໍ່ຮອດເດືອນສາມຫາເດືອນສີ່ ກໍ່ໄດ້ມີຊາວບ້ານໄປຖາງປ່າແຖວນັ້ນເຮັດໄຮ່, ຍ້ອນຂາຂອງຂ້ອຍສັ້ນແລ່ນບໍ່ໄວ, ຈຶ່ງມີມະນຸດຄົນໜຶ່ງຈັບເອົາຂ້ອຍໄປຂັງໄວ້ເກືອບຮອດເດືອນ, ຕໍ່ມາເຂົາກໍ່ເອົາຂ້ອຍໄປວາງຂາຍຕາກແດດຢູ່ຕະຫຼາດແຫ່ງໜຶ່ງ.





ອີກບໍ່ດົນປານໃດເຂົາກໍ່ເອົາຂ້ອຍໄປຂັງໄວ້ຄອກເຫຼັກດົນສົມຄວນ ເພື່ອຈະເອົາຂ້ອຍອອກໄປຂາຍຢູ່ທີ່ອື່ນ. ຈາກນັ້ນ ເຂົາກໍ່ເອົາຂ້ອຍເຂົ້າໄປໃສ່ລົດ ຈົນຂ້ອຍຫາຍໃຈເກືອບບໍ່ໄດ້. ພໍລົງຈາກລົດ, ເຂົາກໍ່ມາຍາດຊື້ຍາດຂາຍຖິ້ມຂ້ອຍໄປ ຖິ້ມຂ້ອຍມາ, ບັງເອີນເປັນແຕ່ໂຊກ ໄດ້ມີຊາຍຄົນໜຶ່ງມາຊື້ຂ້ອຍໄປບ້ານຂອງເຂົາ, ແລ້ວເຂົາຈຶ່ງເອົາປອກເຫຼັກມາມັດຂາຂ້ອຍ ແລ້ວໃຫ້ຄູບາມາສວດມົນ, ຈາກນັ້ນກໍ່ນຳຂ້ອຍມາປ່ອຍໄວ້ຫ້ວຍນ້ຳແຫ່ງນີ້ດ້ວຍຄວາມລອດຕາຍ ຄືແນວນັ້ນແລ້ວ ອ້າຍນົກແສນງາມເອີຍ !

ນົກທັງສອງໄດ້ຟັງແລ້ວກໍ່ ............

# <u>ບົດທີ 11.</u>

## ອາຫານຕາມລະດູການ.

### 1: <u>ຄວາມໝາຍຂອງອາຫານຕາມລະດູການ.</u>

ລະດູການຂອງອາຫານມີຄວາມໝາຍວ່າ: **ແມ່ນອາຫານທີ່ມີຂຶ້ນຕາມແຕ່ລະໄລຍະຂອບຟ້າລະດູການຂອງມັນ.**

***<u>ຕົວຢ່າງ</u>***: ເດືອນ ມັງກອນ - ມີນາ ອາດຈະມີອາຫານປະເພດໃດໜຶ່ງເກີດຂຶ້ນຢູ່ໃນທ້ອງຖິ່ນໃດໜຶ່ງ ແລະ ແຕ່ລະທ້ອງຖິ່ນມັນກໍ່ມີອາຫານທີ່ເປັນເອກະລັກສະເພາະຂອງໃຜມັນ. ປະເພດອາຫານທີ່ກ່າວມານີ້ແມ່ນປະເພດອາຫານທີ່ໄດ້ມາຈາກຊີວະນາໆພັນໝາຍຄວາມວ່າແມ່ນອາຫານທີ່ເກີດຂຶ້ນຕາມທຳມະຊາດ.

ອາຫານການກິນມັນເປັນສິ່ງຈຳເປັນທີ່ທຸກຄົນຂາດບໍ່ໄດ້, ແຕ່ຄວາມຕ້ອງການບໍລິໂພກອາຫານຂອງແຕ່ລະຄົນມັນບໍ່ຄືກັນ ແລະ ແຕ່ລະທ້ອງຖິ່ນມັນກໍ່ມີປະເພດອາຫານທີ່ເປັນເອກະລັກຢ່າງໃດຢ່າງໜຶ່ງຂອງແຕ່ລະທ້ອງຖິ່ນ.

**<u>ຕົວຢ່າງ:</u>** ອາຫານທີ່ເປັນເອກະລັກ ແລະ ລືຊື່ຂອງທ້ອງຖິ່ນຊຽງຂວາງມີຄື: ໝາກຈອງ, ໝາກຄາຍ, ໝາກໝັ້ນ, ນົກແອ່ນ, ໝໍ່ສົ້ມ, ໄຂ່ເມົ່າ ເຫຼົ່ານີ້ເປັນຕົ້ນ.



### 2: <u>ລະດູການອາຫານທ້ອງຖິ່ນ.</u>

ປະເພດອາຫານທີ່ເປັນເອກະລັກຂອງທ້ອງຖິ່ນມັນໄດ້ເປັນສັນຍາລັກທີ່ບົ່ງບອກເຖິງຈຸດພິເສດຂອງທ້ອງຖິ່ນ ແລະ ມັນກໍ່ໄດ້ກາຍເປັນສະເໜ່ໃຫ້ແກ່ແຂກຄົນທີ່ສ້າງຄວາມຊົງຈຳໄວ້ກັບທ້ອຖິ່ນນັ້ນໆ, ແຕ່ປະເພດອາຫານດັ່ງກ່າວກໍ່ບໍ່ໝາຍຄວາມວ່າຈະມີຢູ່ທຸກເວລາ ໂດຍສະເພາະແລ້ວກໍ່ແມ່ນອາຫານທີ່ໄດ້ມາຈາກຊີວະນາໆພັນ.



**ລະດູການອາຫານ**

| ເດືອນ 1-2 | ເດືອນ 6 - 7 | ເດືອນ 9 - 11 |
|---|---|---|
| + ມີໃບຈອງອ່ອນ.<br>+ ໄຂ່ເມົ້າ.<br>+ ປາພັ່ນ. | + ໝາກຈອງ,<br>+ ໝາກຄາຍ.<br>+ ໝາກໝັ້ນ.<br>+ ເຫັດຫວາຍ.<br>+ ໜໍ່ຈ້າໜໍ່ລັນ. | + ນົກແອ່ນ.<br>+ ໜໍ່ສົ້ນ.<br>+ ຕໍ່ດ່ານ, ຕໍ່ແຄະ<br>+ ປາແຝກ. |

<u>***ຄໍາຖາມ:***</u>

*1: ອາຫານທີ່ເປັນເອກະລັກຂອງຊຽງຂວາງມີຫຍັງແດ່ ?*

*2: ຍ້ອນຫຍັງອາຫານທີ່ເປັນເອກະລັກຂອງທ້ອງຖິ່ນຈຶ່ງມີຄວາມສໍາຄັນກວ່າອາຫານທົ່ວໆໄປ ?*

## *ອາຫານບ້ານເຮົາ*

ເພິ່ນວ່າ   ມັງກອນ ລົມພັດຕ້ອງ   ຫອມກິ່ນດອກຈອງບານ
ຕົກມາຮອດກຸມພາ   ກິນແຈ່ວບອງອ່ອມປູຫ້ວຍ
ມີນາ ມາເຖິງແລ້ວ   ກິນໄຂ່ເມົ່າເຂົ້າຈີ່ພອນ
ຫອມຫວນກາຍເປັນຝັນ   ຮອດວັນບໍ່ລືມໄດ້
ເມສາ ບອກຂ່າວໃຫ້   ກິນແກງສົ້ມປາແຝກຄັງ
ຍັງບໍ່ລືມພຶດສະພາ   ນໍ້າເຜີ້ງຫວານເໜືອເວົ້າ
ເຂົ້າຮອດເດືອນຫົກແລ້ວ   ຍັງມີຮອດເຫັດຫວາຍ
ເດືອນເຈັດຕົກມາເຖິງ   ກິນໝາກຈອງມອງຟ້າ
ສິງຫາ ຍັງລໍໄຫ້   ກິນຫໍ່ເຂົ້າປະດັບດິນ
ຫຼາຍອາຫານການກິນ   ຮອດຕໍ່ແຕນນິກແອ່ນຕຸ້ງ
ລຸງຕຸລາ ມາແລ້ວ   ເຂົ້າປ່າຫາໜໍ່ສັນ
ເພິ່ນພາກັນນິຍົມ   ຕົ້ມໃສ່ແກງຜັກເສີ້ຍ
ບໍ່ໄດ້ເສຍສູນສິ້ນ   ອາຫານພອນຕັ້ງແຕ່ປູ່
ຂອງຄູ່ກັນຢູ່ແລ້ວ   ຮັກສາໄວ້ສືບມາ
ບໍ່ໄດ້ພາກັນລືມ   ຂອງແພງເລີດຄ່າ
ພາກັນສຸກມ່ວນແມ້ງ   ສະຫວັນຟ້າກໍ່ບໍ່ປານ   ເຈົ້າເອີຍ

**ຈົບ !**

# ບົດທີ 12.

# ການທຳລາຍຊີວະນາໆພັນ.

## 1: ຄວາມໝາຍຂອງການທຳລາຍ.

ການທຳລາຍມີຄວາມໝາຍວ່າ: ແມ່ນການເຮັດໃຫ້ທຸກສິ່ງຢ່າງດັບສູນໄປນັບທັງສິ່ງທີ່ມີຊີວິດ ແລະ ບໍ່ມີຊີວິດລວມທັງສະພາບແວດລ້ອມ, ວັດຖຸອຸປະກອນຕ່າງໆ ທີ່ມີມີສ່ວນພົວພັນຊຶ່ງກັນ ແລະ ກັນ. ໝາຍຄວາມວ່າ: ການທີ່ເຮັດໃຫ້ສິ່ງໜຶ່ງໄດ້ຮັບຜົນກະທົບ ມັນກໍ່ຈະແຕະຕ້ອງເຖິງສິ່ງໜຶ່ງໃຫ້ມີຜົນກະທົບເຊັ່ນດຽວກັນ.

**ຕົວຢ່າງ:** ການທຳລາຍປ່າໄມ້, ມັນຈະເຮັດໃຫ້ຖິ່ນຢູ່ອາໄສຂອງພືດ ແລະ ສັດຖືກສູນເສຍ, ສາຍນ້ຳກໍ່ຈະບົກແຫ້ງ, ຖ້າຫາກສາຍນ້ຳບົກແຫ້ງ, ມັນກໍ່ຈະຂາດປູປາ, ຫາກບໍ່ມີປູປາກິນ, ຄົນເຮົາກໍ່ຈະຂາດອາຫານ, ຖ້າຂາດອາຫານມັນກໍ່ຈະແຕະຕ້ອງເຖິງສຸຂະພາບ, ຫາກເສຍສຸຂະພາບກໍ່ໝາຍຄວາມວ່າສູນເສຍໝົດທຸກຢ່າງ.

## 2: ຮູບແບບການທຳລາຍຊີວະນາໆພັນ.

ການທຳລາຍຊີວະນາໆພັນມີຫຼາຍລັກສະນະເຊັ່ນວ່າ: ການທຳລາຍປ່າໄມ້, ການນຳໃຊ້ເຄື່ອງມືຫາກິນທີ່ບໍ່ຖືກຕ້ອງ, ການນຳໃຊ້ອາວຸດສົງເພື່ອຫາສັດນ້ຳສັດປ່າ, ການນຳໃຊ້ໄຟຟ້າຈັບປາ, ການໃຊ້ສານພິດເຄມີເພື່ອເບື່ອປາ ແລະ ອື່ນໆ.

ສິ່ງທັງໝົດທີ່ກ່າວມານັ້ນ ເປັນສາເຫດຕົ້ນຕໍທີ່ພາໃຫ້ຊີວະນາໆພັນດັບສູນ, ໂດຍສະແມ່ນຈຳພວກສັດນ້ຳ ແລະ ສັດປ່າ.

## 3: ການນຳໃຊ້ເຄື່ອງມືຫາກິນທີ່ຖືກຕ້ອງ.

ເຄື່ອງມືຫາກິນເປັນສິ່ງສຳຄັນຫຼາຍ, ການນຳໃຊ້ເຄື່ອງມືຫາກິນແບບດັ້ງເດີມທີ່ພໍ່ແມ່ເຄີຍນຳໃຊ້ຜ່ານມານັ້ນມັນບໍ່ໄດ້ເປັນການດັບສູນຊີວະນາໆພັນທີ່ມີຢູ່ຕາມທ້ອງຖິ່ນ.

**ໝາຍຄວາມວ່າ:** ຊີວະນາໆພັນຍັງສາມາດສືບຕໍ່ແພ່ພັນຕໍ່ໄປໄດ້.

ເຄື່ອງມືຫາກິນແບບດັ້ງເດີມລວມມີ: ສ້ອນ, ໄຊ, ແຫ, ມອງ....



## ບົດເຝິກຫັດ.

ການກະທຳລຸ່ມນີ້ແມ່ນຫຍັງເປັນການທຳລາຍສັດນ້ຳ - ສັດປ່າຫຼາຍກວ່າໝູ່ ?

ຍ້ອນຫຍັງ ?

| ໃຊ້ຢາເບື່ອ | ໃຊ້ອາວຸດລ່າສັດ. | ທຳລາຍປ່າໄມ້. |
| --- | --- | --- |
| .......................... | .................................. | ................................. |
| .......................... | .................................. | ................................. |
| .......................... | .................................. | ................................ |
| .......................... | .................................. | ................................ |

# ບົດທີ 13.

# ສຸກໃຈໃນບ້ານເກີດ.

## 1: ຄວາມສຳຄັນຂອງບ້ານເກີດ.

ບ້ານເກີດເປັນບ່ອນກຳເນີດຊີວິດຂອງມະນຸດຜູ້ໜຶ່ງໆ, ທຸກຄົນເກີດມາລ້ວນແຕ່ມີບ້ານເກີດເມືອງນອນເປັນຂອງຕົນເອງ, ບ້ານເກີດຈະເປັນບ່ອນທີ່ບົ່ງບອກເຖິງຖິ່ນລຳເນົາ, ບົ່ງບອກເຖິງເຂດແຄ້ວນ ແລະ ທີ່ມາຂອງຄົນຜູ້ໜຶ່ງໆ.



ຢູ່ໃນບ້ານເກີດຈະມີພໍ່ແມ່, ອ້າຍເອື້ອຍນ້ອງ ແລະ ໝູ່ຄູ່ເພື່ອນສະຫາຍ, ພ້ອມກັນນັ້ນຢູ່ໃນບ້ານເກີດເມືອງນອນກໍ່ຈະມີທ້ອງຖິ່ນດິນນາ, ມີບ່ອນທຳມາຫາກິນເພື່ອການລ້ຽງຊີບ, ມີທັດສະນີຍະພາບທີ່ສວຍງາມ, ມີຫ້ວຍນ້ຳລຳເຊ, ມີພູຜາປ່າໄມ້ ແລະ ສິ່ງອື່ນໆ.

ມະນຸດເຮົາເກີດມາລ້ວນແຕ່ມີຄວາມຕ້ອງການຄວາມສຸກ ແລະ ກໍ່ບໍ່ມີຄວາມສຸກໃດໆ ເທົ່າກັບຄວາມສຸກທີ່ໄດ້ຢູ່ໃກ້ກັບຮ່ອມເອີກຂອງບິດາມານດາ, ໄດ້ຢູ່ໃກ້ກັບຍາດຕິພີ່ນ້ອງໃນທ້ອງຖິ່ນຂອງຕົນ.

## 2: ຮັກ ແລະ ຜູກພັນກັບບ້ານເກີດ.

ທຸກຄົນບໍ່ສາມາດລືມບ້ານເກີດເມືອງນອນຂອງຕົນໄດ້, ຫຼາຍຄົນເມື່ອເຕີບໃຫຍ່ຂຶ້ນມາແລ້ວກໍ່ໄດ້ອອກຈາກບ້ານເພື່ອໄປສຶກສາຮ່ຳຮຽນ, ໄປເຮັດວຽກງານ, ຫຼາຍຄົນກໍ່ໄດ້ເປັນຜູ້ທີ່ມີບົດບາດໃນສັງຄົມ, ເປັນພໍ່ຄ້າຊາວຂາຍຈົນກາຍເປັນຄົນຮັ່ງມີດີໄດ້.

ແຕ່ຢ່າງໃດກໍ່ຕາມທຸກຄົນເຫຼົ່ານັ້ນກໍ່ຍັງບໍ່ລືມໄລບ້ານເກີດເມືອງນອນຂອງຕົນ, ມີຫຼາຍຄົນກໍ່ຍັງໄດ້ກັບມາສ້າງຄຸນງາມຄວາມດີ ແລະ ທຳບຸນກຸສົນໄວ້ກັບແຜ່ນດິນແມ່.

ການສ້າງຄຸນຄວາມດີໄວ້ກັບບ້ານເກີດກໍ່ມີຫຼາຍຢ່າງທີ່ທຸກຄົນສາມມາດເຮັດໄດ້ໂດຍເລີ່ມຈາກການສ້າງຄວາມຮັກກັບບ້ານເກີດເປັນສິ່ງສຳຄັນໃນນັ້ນກໍ່ເລີ່ມຈາກການຮັກພໍ່ແມ່ຍາດພີ່ນ້ອງ, ຮັກດິນດອນ ແລະ ຮັກບ່ອນທຳມາຫາກິນ, ໂດຍສະເພາະແລ້ວກໍ່ແມ່ນ

ຮັກສັດນ້ຳສັດປ່າທີ່ມີໃນທ້ອງຖິ່ນຂອງເຮົາ, ໝາຍຄວາມວ່າບໍ່ທຳລາຍ, ບໍ່ເຮັດໃຫ້ມັນດັບສູນ, ທຸກຄົນຕ້ອງຖືວ່າ ຮັກຊີວິດຂອງສັດນາໆພັນ ຄືຮັກຊີວິດຂອງເຮົາ.



**ຄຳຖາມ**

*1: ຮັກບ້ານເກີດເມືອງນອນແມ່ນຮັກຫຍັງແດ່ ?*

*2: ຖ້າຮັກບ້ານເກີດເມືອງນອນແມ່ນບໍ່ຄວນທຳລາຍຫຍັງແດ່ ?*

**ເພງ**

*ພູມພາບຊຽງຂວາງ.*

ແຜ່ນດິນຊຽງຂວາງ
ລົມພັດແປກໂອນເອັນ
ນົກຕັ່ງລໍສົ່ງສຽງ
ເຖິງວ່າຕົວເຈົ້ານ້ອຍ
ແຜ່ນດິນຊຽງຂວາງ
ເປັນສຽງແຄນເຜີຍແຜ່
ໃຕ້ຟ້າທົ່ງໄຫ
ທັງທຳນອງຄຳເວົ້າ
ໂອແດນຊຽງຂວາງ
ມີທັງສາຍທະລາ
ໂອຊຽງຂວາງ
ນ້ຳໃຈຮັກຊາດ
ຂົງເຂດຊຽງຂວາງ
ຊັບໃນດິນສົມບູນ
ຕັ້ງແມ່ນບຸນເຮົາແລ້ວ
ຍ້ອນປະຊາຊ່າງທຳ

ງາມແທ້ໜາພູຜາປ່າແປກ
ສະອອນເດນໍເຂດປົດປ່ອຍ
ສຳນຽງສຽງຫວານຈ້ອຍໆ
ນົກນ້ອຍກໍ່ວ່າແສນງາມ
ຄຶກຄື້ນແທ້ສຽງແຄນແລນແຕ່
ໄຊຊະນະປະຊາຊົນລາວ
ເພີ່ມຫຼາຍສີສັນກວ່າເກົ່າ
ໂຮມເຂົ້າເໝືອນດັ່ງຄົນດຽວ
ອຸດົມຫຼາຍໃນພົງພະນາ
ບໍ່ນ້ຳໃສໄຫຼລົນທຸກວັນບໍ່ຂາດ
ແດນເມືອງເໜືອຫຼາຍເຊື້ອພົງຍາດ
ໃສສະອາດເໝືອນດັ່ງດວງດາວ
ສຸກເຫຼືອຫຼາຍສາຍໃຈເມືອງພວນ
ເກື້ອກູນລັງງຽງຄູ່ຊູຄ້ຳ
ດັ່ງແກ້ວມະນີເລີດລ້ຳ
ຊູຄ້ຳເມືອງຊຽງຂວາງເອີຍ.

# ບົດທີ 14.

## ເຝິກປະຕິບັດ

## ການຂະຫຍາຍແນວພັນໝາກໄມ້ພື້ນບ້ານ.

### 1: ຄວາມສຳຄັນຂອງກິດຈະກຳ.

ການປະຕິບັດກິດຈະກຳສືບສານຄວາມຮູ້ພູມປັນຍາທ້ອງຖິ່ນເພື່ອການຮຽນຮູ້ເປັນກິດຈະກຳໜຶ່ງທີ່ມີຄວາມສຳຄັນຫຼາຍ, ເພາະວ່າມັນໄດ້ນຳເອົາຄວາມຮູ້ຂອງຊຸມຊົນຢູ່ໃນທ້ອງຖິ່ນທີ່ເຫັນວ່າມີຄວາມສອດຄ່ອງ ເພື່ອນຳມາສິດສອນ ແລະ ເຝິກປະຕິບັດໃຫ້ແກ່ເດັກລຸ່ນໜຸ່ມຢູ່ໃນໂຮງຮຽນ. ກິດຈະກຳເຝິກປະຕິບັດການຂະຫຍາຍແນວພັນໝາກໄມ້ພື້ນບ້ານກໍ່ແມ່ນກິດຈະກຳໜຶ່ງທີ່ເຫັນວ່າມີຄວາມສຳຄັນຫຼາຍ ແລະ ມັນກໍ່ມີຄວາມຈຳເປັນທີ່ຈະຕ້ອງໄດ້ນຳພາເດັກນັກຮຽນເຝິກປະຕິບັດເພາະເຂົາຈະມີໂອກາດໄດ້ນຳໃຊ້ເຂົ້າໃນຊີວິດປະຈຳວັນຂອງຕົນເອງ.



ເປົ້າໝາຍຂອງການເຝິກປະຕິບັດກິດຈະກຳນີ້ກໍ່ເພື່ອໃຫ້ບັນລຸຕາມ 2 ຈຸດປະສົງໃຫຍ່ຄື:

- ເພື່ອເປັນການປູກຈິດສຳນຶກໃຫ້ແກ່ເດັກມີຄວາມເຂົ້າໃຈກ່ຽວກັບຄຸນປະໂຫຍດ ແລະ ຄວາມສຳຄັນຂອງການຂະຫຍາຍແນວພັນໝາກໄມ້ພື້ນບ້ານທີ່ມີຢູ່ໃນທ້ອງຖິ່ນ.
- ໃຫ້ເດັກສາມາດປະຕິບັດການຂະຫຍາຍແນວພັນໝາກໄມ້ໃນຂັ້ນພື້ນຖານໄດ້.

### 2: ການກະກຽມ.

+ ກະກຽມ ຫຼື ພົວພັນຂໍການຊ່ວຍເຫຼືອຈາກຊາວບ້ານຜູ້ມີປະສົບການເພື່ອຊ່ວຍສິດສອນ ແລະ ນຳພານັກຮຽນເຝິກປະຕິບັດຕົວຈິງ.
+ ກຽມສະຖານທີ່ເຝິກປະຕິບັດ.
+ ກຽມກິ່ງງ່າແນວພັນໝາກໄມ້ພື້ນບ້ານຕາມການແນະນຳຂອງຜູ້ທີ່ຈະມາຊ່ວຍເຝິກ.
+ ກະກຽມອຸປະກອນຕ່າງໆຕາມຄຳແນະນຳເຊັ່ນ: ພ້າ, ມີດ, ແພຢາງ, ດິນດາກ...

**ໝາຍເຫດ**: ໃຫ້ເຝິກປະຕິບັດການຂະຫຍາຍແນວພັນໝາກໄມ້ທີ່ມີຢູ່ໃນທ້ອງຖິ່ນ ເຊັ່ນວ່າ: ໝາກຈອງ, ໝາກຄາຍ, ໝາກໝັ້ນ... ເຫຼົ່ານີ້ເປັນຕົ້ນ....

## 3: ຂັ້ນຕອນຝຶກປະຕິບັດ.



+ ແນະນຳນັກຮຽນສັງເກດ ແລະ ຕິດຕາມ.
+ ໃຫ້ຊຸມຊົນຜູ້ມາຊ່ວຍສອນ ແນະນຳຂັ້ນຕອນການຕັດຕໍ່ກິ່ງງ່າ ໝາກໄມ້ສະໜິດໃດໜຶ່ງ ຫຼື ການກ້າແກ່ນແນວພັນ ໝາກໄມ້ແນວໃດໜຶ່ງ.
+ ໃຫ້ຊຸມຊົນສາທິດການປະຕິ ບັດແຕ່ລະຂັ້ນຕອນ.
+ ໃຫ້ນັກຮຽນແຕ່ລະຄົນ ຫຼື ແຕ່ລະກຸ່ມລົງມືປະຕິບັດຕົວຈິງ.
+ ໃຫ້ຊຸມຊົນ ( ຜູ້ຊ່ວຍສອນ ) ຕິດຕາມ ແລະ ຊ່ວຍເຫຼືອເດັກແຕ່ລະຄົນ.

- *ຄູທວນຄືນຄວາມເຂົ້າໃຈ ແລະ ແນະນຳໃຫ້ສືບຕໍ່ໄປປະຕິບັດຢູ່ບ້ານ, ພ້ອມກັນນັ້ນກໍ່ນຳພານັກຮຽນສົນທະນາກ່ຽວກັບຄວາມສຳຄັນຂອງການຕັດຕໍ່ກິ່ງງ່າ ຫຼື ຂະຫຍາຍແນວພັນໝາກໄທ້ພື້ນບ້ານ, ຊຶ່ງແມ່ນວຽກງານໜຶ່ງທີ່ພໍ່ແມ່ໄດ້ນຳພາສືບທອດກັນມາຕັ້ງແຕ່ດຶກດຳບັນຈົນເຖິງເທົ່າທຸກວັນນີ້.*

***ຄຳທວຍ***: *ກົກມັນຕາຍ ປາຍມັນຕາກ ໝາກມັນໄດ້ສີ່ຊ້າຫ້າແສນ*
*ແມ່ນຫຍັງ ? ( ໝາກຄໍ້ )*
*+ ກົກມັນທໍ່ລຳເຮືອ ໃບມັນທໍ່ເກືອເມັດໜຶ່ງກໍ່ບໍ່ໄດ້*
*ແມ່ນຫຍັງ ? ( ກົກແປກ )*

# ບົດທີ 15.

## ບົດທວນຄືນ.

### 1: ຊີວະນາໆພັນກະສິກໍາ ທໍາມະຊາດ.

ຊີວະນາໆພັນກະສິກໍາທໍາມະຊາດ ມີຄວາມໝາຍວ່າ: ແມ່ນ ພືດ ແລະ ສັດ ທີ່ເກີດຂຶ້ນຕາມທໍາມະຊາດນັ້ນເອງ, ໝາຍຄວາມວ່າບໍ່ແມ່ນພືດທີ່ເຮົາປູກ ແລະ ບໍ່ແມ່ນ ສັດທີ່ເຮົາລ້ຽງຂຶ້ນມາ.



***ຕົວຢ່າງ***: ຊີວະນາໆພັນປະເພດສັດ ນົກ, ຕໍ່, ແຕນ, ກະຮອກ, ຈອນຟອນ, ບີ້ງ, ບ່າງ, ອົ້ນ, ປູ, ປາ, ກຸ້ງ, ຫອຍ, ໜ້ຽວ, ໜ່ຽງ ແມງດາ ແລະ ອື່ນໆ.

ນອກນີ້ກໍ່ຍັງມີຊີວະນາໆພັນ ປະເພດພືດຜັກທີ່ເກີດຂຶ້ນຕາມ ທໍາມະຊາດຄື: ເຫັດ, ຜັກປ່າ, ໜໍ່ຈ້າ, ໜໍ່ລັນ, ໜໍ່ຂົມ, ໃບຍົມ, ໃບສົ້ງ ...

ສິ່ງທີ່ກ່າວມາຂ້າງເທິງນັ້ນ ເອີ້ນວ່າປະເພດຊີວະນາໆພັນກະສິກໍາທໍາມະຊາດ.

### 2: ຄວາມສໍາຄັນຂອງຊີວະນາໆພັນ.



ຊີວະນາໆພັນກະສິກໍາທໍາມະ ຊາດມີຄວາມສໍາຄັນຫຼາຍຕໍ່ກັບການ ດໍາລົງຊີວິດຂອງເຮົາເຊັ່ນວ່າ:

- ໃຊ້ເປັນອາຫານປະຈໍາວັນ.
- ໃຊ້ເປັນສິນໃນຫຼາຍຮູບແບບ
- ໃຊ້ເປັນຢາປິ່ນປົວພະຍາດ ຂອງຄົນ ແລະ ສັດ.
- ໃຊ້ເຮັດຮີດຄອງປະເພນີ.
- ໃຊ້ເປັນເຄື່ອງປະດັບເອ້ຍ້ອງ.

ນອກຈາກນີ້ແລ້ວຍັງໃຊ້ໃນທາງການສຶກສາຄົ້ນຄວ້າ ແລະ ອື່ນໆ.

### 3: <u>ການປົກປັກຮັກສາຊີວະນາໆພັນ.</u>

ໃນສະພາບປັດຈຸບັນ, ບັນຫາຂອງຊີວະນາໆພັນຖືກຄຸກຄາມຢ່າງໜັກໜ່ວງ, ມີຫຼາຍສິ່ງຫຼາຍຢ່າງກໍ່ໃກ້ຈະສູນພັນ ແລະ ມີຫຼາຍຢ່າງກໍ່ໝົດໄປແລ້ວ.

ດັ່ງນັ້ນ ພວກເຮົາທຸກຄົນຕ້ອງພ້ອມກັນຄຸ້ມຄອງເອົາໄວ້ເພື່ອໃຫ້ມັນແພ່ພັນ, ການອະນຸລັກ ແລະ ຄຸ້ມຄອງຊີວະນາໆພັນບໍ່ໝາຍຄວາມວ່າບໍ່ໃຫ້ກິນ, ບໍ່ໃຫ້ໃຊ້, ພວກເຮົາສາມາດນຳໃຊ້ເປັນອາຫານໄດ້ແຕ່ບໍ່ເຮັດໃຫ້ມັນດັບສູນ, ໂດຍສະເພາະແລ້ວແມ່ນບໍ່ໃຫ້ນຳໃຊ້ເຄື່ອງມືຫາກິນທີ່ຜິດກົດໝາຍເປັນຕົ້ນແມ່ນ: ອາວຸດສົງຄາມທຸກປະເພດ, ບໍ່ນຳໃຊ້ສານພິດເຄມີເພື່ອທຳລາຍສັດ, ບໍ່ນຳໃຊ້ໄຟຟ້າເພື່ອຈັບປາ, ບໍ່ລ່າສັດໃນຍາມແພ່ພັນ...

*ຄຳຖາມ*

*1: ຖ້າສັດນ້ຳ ແລະ ສັດປ່າ ໝົດໄປການດຳລົງຊີວິດຂອງພວກເຮົາຈະເປັນແນວ ?*

*2: ວິທີປ້ອງກັນບໍ່ໃຫ້ສັດນ້ຳ ແລະ ສັດປ່າໝົດໄປເຮົາຄວນເຮັດແນວໃດແດ່ ?*

## ຄຳຂອບໃຈ.

ປື້ມຫຼັກສູດທ້ອງຖິ່ນເຫຼັ້ມນີ້ມີຜົນສຳເລັດຂຶ້ນມາໄດ້ກໍ່ເນື່ອງມາຈາກການປະກອບສ່ວນຂອງ:

+ ທີມງານສ້າງຫຼັກສູດທ້ອງຖິ່ນຂອງພະແນກສຶກສາທິການ ແລະ ກິລາ ແຂວງຊຽງຂວາງ.
+ ຫ້ອງການສຶກສາທິການ ແລະ ກິລາ ເມືອງພູກູດ.
+ ຄູສອນ ແລະ ຊຸມຊົນໃນທ້ອງຖິ່ນ ເມືອງພູກູດ.
+ ໃຫ້ຄຳປຶກສາ ແລະ ສະໜັບສະໜູນໂດຍ: ໂຄງການພັດທະນາລະບົບການຜະລິດແບບນິເວດກະສິກຳ ຢູ່ເຂດພູດອຍພາກເໜືອຂອງ ສ.ປ.ປ ລາວ ( TABI ) ປະຈຳແຂວງຊຽງຂວາງ.

## ຄະນະຮັບຜິດຊອບ:

+ ທ່ານ ນາງ ສາຍສະໝອນ ມັງໜໍ່ເມກ ຮອງ ຫົວໜ້າພະແນກສຶກສາທິການ ແລະ ກິລາ ແຂວງຊຽງຂວາງ.
+ ທ່ານ ສຸນເດືອນ ສິມສະໄໝ ຫົວໜ້າຂະແໜງພະລະ - ສິລະປະ ສຶກສາແຂວງ.
+ ທ່ານ ນາງ ນວນສີ ຫົວໜ້າຂະແໜງ ອະນຸບານ - ປະຖົມ ສຶກສາແຂວງ.
+ ທ່ານ ບົວລິນ ພົມມະສິນ ສຶກສານິເທດມັດທະຍົມ ສຶກສາແຂວງ.

## ອອກແບບ ແລະ ເນື້ອໃນ:

+ ທ່ານ ສຸນເດືອນ ສິມສະໄໝ ສຶກສາທິການແຂວງຊຽງຂວາງ.
+ ທ່ານ ເພັງ ສຸວັນທອງ ຄະນະຊີ້ນຳໂຄງການຂັ້ນກະຊວງ.
+ ທ່ານ ຄຣິດ ຟຼີນ ຜູ້ຊ່ຽວຊານໂຄງການ ຕາບີ ( TABI )

## ທີມງານສ້າງຫຼັກສູດ.

+ ທ່ານ ສຸນເດືອນ ສິມສະໄໝ ພະແນກສຶກສາທິການ ແລະ ກິລາແຂວງຊຽງຂວາງ.
+ ທ່ານ ນວນສີ ພະແນກສຶກສາທິການ ແລະ ກິລາແຂວງຊຽງຂວາງ.
+ ທ່ານ ນາງ ບົວສອນ ຫ້ອງການສຶກສາທິການ ແລະ ກິລາເມືອງພູກູດ.
+ ທ່ານ ນາງ ຈັນລາ ຄູສອນ ໂຮງຮຽນ ມັດທະຍົມຕົ້ນພູກູດ.

+ ທ່ານ ນາງ ຂັນຄຳ ຄູສອນ ໂຮງຮຽນ ປະຖົມບ້ານນາຊາຍທອງ.

+ ທ່ານ ນາງ ດວງສີ ຄູສອນ ໂຮງຮຽນປະຖົມບ້ານປຸ່ງໝັ້ນ.

+ ທ່ານ ນາງ ສຸດທາ ຄູສອນ ໂຮງຮຽນປະຖົມບ້ານເຄິງ.

**ຊຸມຊົນທີ່ໃຫ້ຂໍ້ມູນ:**

+ ຊຸມຊົນບ້ານນາຊາຍທອງ ເມືອງພູກູດ.

+ ຊຸມຊົນບ້ານປຸ່ງໝັ້ນ ເມືອງພູກູດ.

+ ຊຸມຊົນບ້ານເຄິງ ເມືອງພູກູດ.

+ ຊຸມຊົນບ້ານມຽນ ເມືອງພູກູດ.

